# ຮ່າງຂໍ້ຕົກລົງ

## ວ່າດ້ວຍການອະນຸຍາດດຳເນີນທຸລະກິດ ແລະ ຄຸ້ມຄອງວິສາຫະກິດກົດໝາຍ

**<u>ຄຳຖາມເຈາະຈີ້ມ:</u>**

ຂໍ້ຕົກລົງວ່າດ້ວຍການອະນຸຍາດດຳເນີນທຸລະກິດ ແລະ ການຄຸ້ມຄອງວິສາຫະກິດກົດໝາຍ

1. ທ່ານເຫັນວ່າ ຊື່ ແລະ ໂຄງຮ່າງ ຂອງຮ່າງຂໍ້ຕົກລົງນີ້ເໝາະສົມແລ້ວບໍ່?
2. ທ່ານເຫັນວ່າການຈັດລຽງໝວດ ແລະ ມາດຕາເໝາະສົມແລ້ວບໍ່?
3. ທ່ານ ເຫັນວ່າ ເນື້ອໃນ ມີຄວາມຄົບຖ້ວນ, ຮັດກຸມ ແລະ ຈະແຈ້ງຫຼືບໍ່?
4. ທ່ານເຫັນວ່າ ຫຼັກການໃນການໃຫ້ອະນຸຍາດ ແລະ ການຖອນການອະນຸຍາດ ມີເນື້ອໃນຮັດກຸມ ຄົບຖ້ວນແລ້ວບໍ່?
5. ທ່ານ ເຫັນວ່າ ຍັງເນື້ອໃນ/ບັນຫາໃດອີກແດ່ ທີ່ຄວນກຳນົດໃນຮ່າງຂໍ້ຕົກລົງນີ້?

9 ກັນຍາ 2025

ຮ່າງສະເໜີເພື່ອທາບທາມປະກອບຄຳເຫັນຢ່າງກວ້າງຂວາງ

ສາລະບານ


**ໝວດທີ 1 ບົດບັນຍັດທົ່ວໄປ** ..... 3

ມາດຕາ 1 ຈຸດປະສົງ ..... 3

ມາດຕາ 2 ການອະນຸຍາດດຳເນີນທຸລະກິດກົດໝາຍ ..... 3

ມາດຕາ 3 ຫຼັກການໃຫ້ອະນຸຍາດ ແລະ ການຄຸ້ມຄອງການເຄື່ອນໄຫວຂອງວິສາຫະກິດກົດໝາຍ ..... 4

ມາດຕາ 4 ຂອບເຂດການນຳໃຊ້ ..... 4

**ໝວດທີ 2 ການຂໍອະນຸຍາດດຳເນີນທຸລະກິດ ແລະ ລະບົບຖານຂໍ້ມູນວິສາຫະກິດ.** ..... 4

ມາດຕາ 5 ປະເພດໃຫ້ບໍລິການທາງດ້ານກົດໝາຍ ..... 4

ມາດຕາ 6 ການຂໍອະນຸຍາດດຳເນີນທຸລະກິດກົດໝາຍ ..... 4

ມາດຕາ 7 ເອກະສານປະກອບຂໍອະນຸຍາດດຳເນີນທຸລະກິດ ..... 4

ມາດຕາ 8 ຂັ້ນຕອນ ການພິຈາລະນາອະນຸຍາດດຳເນີນທຸລະກິດ ..... 5

ມາດຕາ 9 ເນື້ອໃນໃບອະນຸຍາດດຳເນີນທຸລະກິດກົດໝາຍ ..... 5

ມາດຕາ 10 ໃບອະນຸຍາດດຳເນີນທຸລະກິດ, ການເກັບຮັກສາ ແລະ ການເຜີຍແຜ່ຂໍ້ມູນ ..... 6

ມາດຕາ 11 ລະບົບຖານຂໍ້ມູນທະບຽນວິສາຫະກິດກົດໝາຍ ..... 6

**ໝວດທີ 3 ການຕໍ່ໃບອະນຸຍາດດຳເນີນທຸລະກິດ** ..... 6

ມາດຕາ 12 ການຂໍຕໍ່ໃບອະນຸຍາດດຳເນີນທຸລະກິດ ..... 6

ມາດຕາ 13 ເອກະສານປະກອບ ເພື່ອການຕໍ່ ການອະນຸຍາດດຳເນີນທຸລະກິດ ..... 6

ມາດຕາ 14 ເງື່ອນໄຂໃນການພິຈາລະນາການຕໍ່ ການອະນຸຍາດດຳເນີນທຸລະກິດ ..... 7

ມາດຕາ 15 ຂັ້ນຕອນການຕໍ່ ການໃບອະນຸຍາດດຳເນີນທຸລະກິດ ..... 7

**ໝວດທີ 4 ການສ້າງຕັ້ງສາຂາວິສາຫະກິດກົດໝາຍ** ..... 7

ມາດຕາ 16 ສາຂາຂອງວິສາຫະກິດກົດໝາຍ ..... 7

ມາດຕາ 17 ເງື່ອນໄຂໃນການສ້າງຕັ້ງສາຂາຂອງວິສາຫະກິດກົດໝາຍ ..... 7

ມາດຕາ 18 ການສ້າງຕັ້ງສາຂາຂອງວິສາຫະກິດກົດໝາຍ ..... 8

ມາດຕາ 19 ຄວາມຮັບຜິດຊອບທາງດ້ານກົດໝາຍຂອງວິສາຫະກິດ ແລະ ສາຂາ ..... 8

**ໝວດທີ 5 ການລາຍງານປະຈຳປີ ກ່ຽວກັບການດຳເນີນທຸລະກິດຂອງວິສາຫະກິດກົດໝາຍ** ..... 8

ມາດຕາ 20 ການລາຍງານປະຈຳປີ ..... 8

ມາດຕາ 21 ເນື້ອໃນຂອງບົດລາຍງານປະຈຳປີ ..... 9

ມາດຕາ 22 ຜົນການລາຍງານປະຈຳປີ ..... 9

**ໝວດທີ 6 ການຕິດຕາມ ແລະ ກວດກາ ວິສາຫະກິດກົດໝາຍ** ..... 9

ມາດຕາ 23 ການຕິດຕາມ ແລະ ກວດກາ ວິສາຫະກິດກົດໝາຍ ..... 9

ມາດຕາ 24 ການຕິດຕາມ ແລະ ກວດກາ ຕາມເອກະສານ ....9
ມາດຕາ 25 ການຕິດຕາມ ແລະ ກວດກາ ຕາມການສະເໜີ ....10
ມາດຕາ 26 ການຕິດຕາມ ແລະ ກວດກາ ກັບທີ່ ....10
ມາດຕາ 27 ການມອບໝາຍໃຫ້ຂະແໜງຍຸຕິທຳຕິດຕາມ ແລະ ກວດກາ ....10
ມາດຕາ 28 ການປະສານງານກັບພາກສ່ວນກ່ຽວຂ້ອງ ....11
ມາດຕາ 29 ຜົນຂອງການຕິດຕາມ ແລະ ກວດກາ ....11
**ໝວດທີ 7 ການໂຈະ ແລະ ຖອນການອະນຸຍາດດຳເນີນທຸລະກິດກົດໝາຍ** ....11
ມາດຕາ 30 ການໂຈະການດຳເນີນທຸລະກິດກົດໝາຍ ....11
ມາດຕາ 31 ການຖອນໃບອະນຸຍາດ ແລະ ລຶບຊື່ວິສາຫະກິດກົດໝາຍ ....12
**ໝວດທີ 8 ບົດບັນຍັດສຸດທ້າຍ** ....12
ມາດຕາ 32 ການຈັດຕັ້ງປະຕິບັດ ....12
ມາດຕາ 33 ຜົນສັກສິດ ....12

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງຍຸຕິທຳ ເລກທີ........../ກຍ
ນະຄອນຫຼວງວຽງຈັນ, ວັນທີ.............. 2025

# ຂໍ້ຕົກລົງ
## ຂອງລັດຖະມົນຕີ ກະຊວງຍຸຕິທຳ
## ວ່າດ້ວຍການອະນຸຍາດດຳເນີນທຸລະກິດ
## ແລະ ການຄຸ້ມຄອງວິສາຫະກິດກົດໝາຍ

- ອີງຕາມ ກົດໝາຍວ່າດ້ວຍທະນາຍຄວາມ,ສະບັບເລກທີ 23/ສພຊ, ລົງວັນທີ 29 ທັນວາ 2022;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງຍຸຕິທຳ, ສະບັບເລກທີ 601/ນຍ, ລົງວັນທີ 14 ຕຸລາ 2021;
- ອີງຕາມ ໜັງສືສະເໜີຂອງກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ ສະບັບເລກທີ......./ ກຄສຍ, ລົງວັນທີ...............................

## ລັດຖະມົນຕີ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການອະນຸຍາດດຳເນີນທຸລະກິດ ແລະ ຕິດຕາມ ແລະ ກວດກາ ການເຄື່ອນໄຫວດຳເນີນທຸລະກິດ ຂອງວິສາຫະກິດກົດໝາຍ ຢູ່ ສປປ ລາວ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ໄດ້ຮັບການຈັດຕັ້ງປະຕິບັດ ຢ່າງເປັນເອກະພາບ, ມີປະສິດທິພາບ ແລະ ປະສິດທິຜົນສູງ ແນໃສ່ຮັບປະກັນໃຫ້ການຈັດຕັ້ງປະຕິບັດກົດໝາຍໃຫ້ເຂັ້ມງວດ, ໂປ່ງໃສ ແລະ ສາມາດກວດສອບໄດ້.

**ມາດຕາ 2 ການອະນຸຍາດດຳເນີນທຸລະກິດກົດໝາຍ**

ການດຳເນີນທຸລະກິດກົດໝາຍ ໝາຍເຖິງ ການເຄື່ອນໄຫວທຸລະກິດ ໃນການໃຫ້ການບໍລິການທາງດ້ານກົດໝາຍ: ການໃຫ້ຄຳປຶກສາທາງດ້ານກົດໝາຍ ແລະ/ຫຼື ການຕາງໜ້າລູກຄວາມໃນການເຂົ້າຮ່ວມໃນການດຳເນີນຄະດີ ຂອງວິສາຫະກິດກົດໝາຍ.

ການອະນຸຍາດດຳເນີນທຸລະກິດກົດໝາຍ ແມ່ນ ການອະນຸຍາດໃຫ້ວິສາຫະກິດກົດໝາຍ ເຄື່ອນໄຫວໃຫ້ການບໍລິການທາງດ້ານກົດໝາຍ ຕາມກົດໝາຍ.

**ມາດຕາ 3 ຫຼັກການໃຫ້ອະນຸຍາດ ແລະ ການຄຸ້ມຄອງການເຄື່ອນໄຫວຂອງວິສາຫະກິດກົດໝາຍ**

ການອະນຸຍາດ ແລະ ການຄຸ້ມຄອງການເຄື່ອນໄຫວຂອງວິສາຫະກິດກົດໝາຍ ໃຫ້ປະຕິບັດຕາມຫຼັກການດັ່ງນີ້:

1. ສອດຄ່ອງກັບແນວທາງ, ແຜນຍຸດທະສາດ, ແລະ ແຜນພັດທະນາວຽກງານກົດໝາຍ ແລະຍຸຕິທຳ; ເຄົາລົບ ແລະ ປະຕິບັດກົດໝາຍ ຢ່າງເຂັ້ມງວດ;
2. ໃຫ້ອະນຸຍາດ, ຄຸ້ມຄອງ, ຕິດຕາມ ແລະ ກວດກາ ຢ່າງລວມສູນ, ເປັນເອກະພາບ ແລະ ໂປ່ງໃສ;
3. ເປັນເອກະລາດໃນການດຳເນີນທຸລະກິດ ແລະ ສະເໝີພາບຕໍ່ໜ້າກົດໝາຍ;
4. ໃຫ້ການບໍລິການ ຢ່າງມີຈັນຍາບັນ, ໂປ່ງໃສ ແລະ ຮັບປະກັນສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ໃຊ້ບໍລິການ;
5. ຊຸກຍູ້ລະດົມໃຫ້ຜູ້ໃຊ້ບໍລິການ ເຄົາລົບ ແລະ ປະຕິບັດກົດໝາຍໃຫ້ຖືກຕ້ອງ ແລະ ມີຄວາມຮັບຜິດຊອບຕໍ່ໜ້າກົດໝາຍ ຕໍ່ການໃຫ້ບໍລິການຂອງຕົນ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ວິສາຫະກິດກົດໝາຍພາຍໃນ ແລະຕ່າງປະເທດ ທີ່ໄດ້ຮັບອະນຸຍາດໃຫ້ດຳເນີນທຸລະກິດ ຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

## ໝວດທີ 2
## ການຂໍອະນຸຍາດດຳເນີນທຸລະກິດ ແລະ ລະບົບຖານຂໍ້ມູນວິສາຫະກິດ.

**ມາດຕາ 5 ປະເພດໃຫ້ບໍລິການທາງດ້ານກົດໝາຍ**

ບຸກຄົນ ຫຼື ນິຕິບຸກຄົນ ຕ້ອງລະບຸ ໃນຄຳຮ້ອງ ຂໍອະນຸຍາດດຳເນີນທຸລະກິດ ປະເພດການໃຫ້ບໍລິການທາງດ້ານກົດໝາຍ ຕາມທີ່ກຳນົດໄວ້ໃນມາດຕາ 20 ຂອງກົດໝາຍວ່າດ້ວຍທະນາຍຄວາມ ດັ່ງນີ້:

- ການໃຫ້ການປຶກສາທາງດ້ານກົດໝາຍ;
- ການຕາງໜ້າລູກຄວາມ ເຂົ້າຮ່ວມໃນການດຳເນີນຄະດີ.

**ມາດຕາ 6 ການຂໍອະນຸຍາດດຳເນີນທຸລະກິດກົດໝາຍ**

ພາຍຫຼັງທີ່ໄດ້ສ້າງຕັ້ງວິສາຫະກິດ ຕາມກົດໝາຍແລ້ວ ຕາມທີ່ກຳນົດໄວ້ໃນມາດຕາ 56 ຂອງກົດໝາຍ ວ່າດ້ວຍທະນາຍຄວາມ, ບຸກຄົນ ຫຼື ນິຕິບຸກຄົນ ຕ້ອງຂໍອະນຸຍາດດຳເນີນທຸລະກິດກົດໝາຍ ກັບກະຊວງຍຸຕິທຳ ໂດຍຜ່ານ ກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ.

ຜູ້ຂໍອະນຸຍາດດຳເນີນທຸລະກິດກົດໝາຍ ຕ້ອງລະບຸໃຫ້ແຈ້ງ ຂົງເຂດກົດໝາຍ ທີ່ໃຫ້ບໍລິການປຶກສາເຊັ່ນ ຂົງເຂດກົດໝາຍທຸລະກິດ, ການຄ້າ, ການລົງທຶນພາຍໃນ ຫຼື ຕ່າງປະເທດ; ການຕາງໜ້າ ແລະ ການເຂົ້າຮ່ວມດຳເນີນຄະດີ ອາຍາ ຫຼື ແພ່ງ ຫຼື ທັງສອງ.

ຜູ້ຮ້ອງຂໍອະນຸຍາດດຳເນີນທຸລະກິດຕ້ອງໄດ້ເສຍເງິນຄ່າບໍລິການ ຕາມລັດຖະບັນຍັດວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ແລະ ຄ່າໃຊ້ຈ່າຍ ໃນການສ້າງ ແລະ ບັນຈຸຂໍ້ມູນໃນລະບົບຖານຂໍ້ມູນ ຈຳນວນ 100,000 ກີບ.

**ມາດຕາ 7 ເອກະສານປະກອບຂໍອະນຸຍາດດຳເນີນທຸລະກິດ**

ນອກຈາກ ການປະກອບເອກະສານ ຕາມທີ່ກຳນົດໄວ້ໃນມາດຕາ 58 ຂອງກົດໝາຍ ວ່າດ້ວຍທະນາຍຄວາມ, ຍັງຕ້ອງ ປະກອບເອກະສານ ເພີ່ມເຕີມລຸ່ມນີ້:

1. ຊີວະປະຫວັດຂອງຜູ້ຖືຮຸ້ນ, ໃນກໍລະນີ ທີ່ຜູ້ຖືຮຸ້ນດຳເນີນທຸລະກິດຂະແໜງການອື່ນ ຫຼື ວິສາຫະກິດກົດໝາຍອື່ນ ຕ້ອງໄດ້ລະບຸໃຫ້ຈະແຈ້ງ;

2. ໃບຢັ້ງຢືນທີ່ຢູ່, ໃບແຈ້ງໂທດ, ສຳເນົາບັດປະຈຳຕົວຂອງ ອຳນວຍການ, ຂາຮຸ້ນ ຫຼື ຜູ້ຖືຮຸ້ນ; ຫຼື ສຳເນົາໜັງສືເດີນທາງ, ໃບອະນຸຍາດພັກເຊົາຈາກຂະແໜງການປ້ອງກັນຄວາມສະຫງົບ ສຳລັບ ຜູ້ຖືຮຸ້ນຄົນຕ່າງປະເທດ; ໃນກໍລະນີ ທີ່ຜູ້ຖືຮຸ້ນເປັນບຸກຄົນໃນຄອບຄົວດຽວກັນ ຕ້ອງສຳເນົາ ສຳມະໂນຄົວ ແລະ ໃບທະບຽນແຕ່ງດອງ;
3. ໃບຢັ້ງຢືນທີ່ຕັ້ງຂອງສຳນັກງານ ແລະ ແຜນວາດທີ່ຕັ້ງຂອງສຳນັກງານ ໂດຍມີການຢັ້ງຢືນຈາກ ອົງການປົກຄອງຕາແສງ ຫຼື ບ້ານທີ່ຕັ້ງຢູ່; ໃນກໍລະນີທີ່ເຊົ່າຫ້ອງການ, ສຳນັກງານ ກໍໃຫ້ມີການ ຢັ້ງຢືນ ຈາກຜູ້ໃຫ້ເຊົ່າ ທີ່ລະບຸຢ່າງຈະແຈ້ງກຳນົດເວລາຂອງການເຊົ່າ ຫຼື ສຳເນົາສັນຍາເຊົ່າ.
4. ສຳເນົາຕົວເລກຜູ້ເສຍອາກອນຂອງວິສາຫະກິດ;
5. ສຳເນົາສັນຍາອອກແຮງງານລະຫວ່າງວິສາຫະກິດ ແລະ ທະນາຍຄວາມ; ໃນກໍລະນີ ທີ່ແມ່ນ ທະນາຍຄວາມຕ່າງປະເທດ ໃຫ້ສຳເນົາ ໃບອະນຸຍາດເຄື່ອນໄຫວວິຊາຊີບກົດໝາຍ ທີ່ອອກ ໂດຍກະຊວງຍຸຕິທຳ.

**ມາດຕາ 8 ຂັ້ນຕອນ ການພິຈາລະນາອະນຸຍາດດຳເນີນທຸລະກິດ**

ໃນການພິຈາລະນາ ອະນຸຍາດດຳເນີນທຸລະກິດກົດໝາຍ ຕາມທີ່ກຳນົດໄວ້ໃນມາດຕາ 59 ຂອງກົດໝາຍວ່າດ້ວຍທະນາຍຄວາມ, ໃຫ້ປະຕິບັດ ຕາມຂັ້ນຕອນດັ່ງນີ້:

1. ກ່ອນຮັບຄຳຮ້ອງ, ຕ້ອງກວດກາ ຄຳຮ້ອງ ແລະ ເອກະສານ ໃຫ້ຖືກຕ້ອງ ແລະ ຄົບຖ້ວນ ຕາມ ມາດຕາ 59 ຂອງກົດໝາຍ ວ່າດ້ວຍທະນາຍຄວາມ ແລະ ມາດຕາ 6 ຂອງຂໍ້ຕົກລົງສະບັບນີ້ ກ່ອນຮັບຄຳຮ້ອງໄວ້ພິຈາລະນາ;
2. ກວດກາຄວາມຖືກຕ້ອງ, ຄົ້ນຄວ້າ ແລະ ກວດກາຄວາມຖືກຕ້ອງຂອງຄຳຮ້ອງ ແລະ ເອກະສານປະກອບ ແລະ ຖ້າເຫັນວ່າບໍ່ຖືກຕ້ອງ ຫຼື ມີຂໍ້ບົກຜ່ອງໃດໜຶ່ງ ຕ້ອງແຈ້ງໃຫ້ ຜູ້ຮ້ອງຂໍ ຊາບ ເປັນລາຍລັກອັກສອນ ພ້ອມດ້ວຍກຳນົດເວລາ ໃຫ້ແກ້ໄຂ. ຖ້າເຫັນວ່າ ຄຳຮ້ອງ ແລະ ເອກະສານປະກອບ ຖືກຕ້ອງຄົບຖ້ວນແລ້ວ ຖືວ່າ ຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດ ມີເງື່ອນໄຂ ຄົບຖ້ວນ ແລະ ຖືກຕ້ອງ, ຕ້ອງສະເໜີໃຫ້ຂັ້ນເທິງພິຈາລະນາອອກໃບອະນຸຍາດ.
3. ກະຊວງຍຸຕິທຳ ຈະອອກໃບອະນຸຍາດດຳເນີນທຸລະກິດ ບົນພື້ນຖານ ເງື່ອນໄຂຕ່າງໆ ທີ່ກຳນົດ ໄວ້ໃນກົດໝາຍ ແລະ ຂໍ້ຕົກລົງສະບັບນີ້ ລວມທັງນິຕິກຳທີ່ກ່ຽວຂ້ອງ ຖືກຕ້ອງ ແລະ ຄົບ ຖ້ວນ ພາຍໃນກຳນົດເວລາ 10 (ສິບ) ວັນ ລັດຖະການ ນັບແຕ່ວັນທີ ຄຳຮ້ອງຂໍອະນຸຍາດ ດຳເນີນທຸລະກິດ ມີເງື່ອນໄຂຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ.
4. ພາຍຫຼັງທີ່ອອກໃບອະນຸຍາດດຳເນີນທຸລະກິດກົດໝາຍແລ້ວ, ກົມຄຸ້ມຄອງ ແລະ ສົ່ງເສີມ ວຽກງານຍຸຕິທຳ ຕ້ອງບັນທຶກ ແລະ ປະກອບເອກະສານເຂົ້າໃນລະບົບຖານຂໍ້ມູນວິສາຫະກິດ ກົດໝາຍ ແລະ ແຈ້ງກ່ຽວກັບການອະນຸຍາດ ໃຫ້ ສະພາທະນາຍຄວາມຊາບ ແລະ ກົມຄຸ້ມ ຄອງທະບຽນວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ໂດຍໄວ;
5. ໃນກໍລະນີທີ່ບໍ່ສາມາດອອກໃບອະນຸຍາດດຳເນີນທຸລະກິດ ຕ້ອງແຈ້ງຕອບໃຫ້ຜູ້ຂໍອະນຸຍາດ ເປັນລາຍລັກອັກ ສອນພ້ອມດ້ວຍເຫດຜົນ ພາຍໃນກຳນົດເວລາ 3 (ສາມ) ວັນ ລັດຖະການ.

**ມາດຕາ 9 ເນື້ອໃນໃບອະນຸຍາດດຳເນີນທຸລະກິດກົດໝາຍ**

ໃບອະນຸຍາດດຳເນີນທຸລະກິດກົດໝາຍ ປະກອບດ້ວຍເນື້ອໃນດັ່ງນີ້:

- ຊື່ ຂອງວິສາຫະກິດກົດໝາຍ ພາສາລາວ ແລະ ພາສາຕ່າງປະເທດ;
- ເລກທະບຽນວິສາຫະກິດກົດໝາຍ ແລະ ວັນທີຂອງທະບຽນວິສາຫະກິດກົດໝາຍ;
- ຊື່ ແລະ ນາມສະກຸນຂອງຜູ້ອຳນວຍການ;
- ທີ່ຕັ້ງສຳນັກງານ;
- ປະເພດການໃຫ້ບໍລິການກົດໝາຍ;

- ອາຍຸຂອງການອະນຸຍາດໃຫ້ດຳເນີນທຸລະກິດກົດໝາຍ.

**ມາດຕາ 10 ໃບອະນຸຍາດດຳເນີນທຸລະກິດ, ການເກັບຮັກສາ ແລະ ການເຜີຍແຜ່ຂໍ້ມູນ**

ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 59 ຂອງກົດໝາຍ ວ່າດ້ວຍທະນາຍຄວາມ, ໃບອະນຸຍາດດຳເນີນທຸລະກິດ ມີອາຍຸ 3 (ສາມ) ປີ ແລະ ສາມາດຕໍ່ໄດ້ ຊຶ່ງຕ້ອງປະຕິບັດຕາມໝວດທີ 3 ຂອງຂໍ້ຕົກລົງສະບັບນີ້.

ວິສາຫະກິດກົດໝາຍ ທີ່ໄດ້ແຈ້ງ ແລະ ຈົດທະບຽນການປ່ຽນແປງເນື້ອໃນທະບຽນວິສາຫະກິດຂອງຕົນ ເຊັ່ນ ປ່ຽນຜູ້ຖືຮຸ້ນ ຫຼື ຂາຮຸ້ນ, ປ່ຽນຜູ້ອຳນວຍການ ຕ້ອງໄດ້ແຈ້ງກ່ຽວກັບການປ່ຽນແປງເນື້ອໃນດັ່ງກ່າວ ເປັນລາຍລັກອັກສອນ ພ້ອມດ້ວຍສຳເນົາເອກະສານທີ່ກ່ຽວຂ້ອງ ໃຫ້ ກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ ຊາບ ພາຍໃນກຳນົດເວລາ 5 (ຫ້າ) ວັນ ລັດຖະການ. ການບໍ່ແຈ້ງພາຍໃນກຳນົດເວລາດັ່ງກ່າວຖືວ່າເປັນການລະເມີດກົດໝາຍ.

ໃນກໍລະນີທີ່ມີການປ່ຽນຊື່ວິສາຫະກິດກົດໝາຍ, ຜູ້ຖືຮຸ້ນ ຫຼື ຂາຮຸ້ນໄປພ້ອມກັນເປັນຊື່ໃໝ່ ແລະ ຜູ້ຖືຮຸ້ນໃໝ່ ຫຼື ຂາຮຸ້ນໃໝ່ ທັງໝົດ ຫຼື ບາງສ່ວນ ບໍ່ສາມາດຂໍປ່ຽນໃບອະນຸຍາດດຳເນີນທຸລະກິດໄດ້ ຕ້ອງໄດ້ຂໍອະນຸຍາດດຳເນີນທຸລະກິດກົດໝາຍໃໝ່.

ໃນກໍລະນີ ທີ່ມີການປ່ຽນສຳນັກງານຂອງວິສາຫະກິດກົດໝາຍ ທີ່ໄດ້ຮັບອະນຸຍາດ ຕ້ອງໄດ້ແຈ້ງກົມຄຸ້ມຄອງ ແລະ ສົ່ງເສີມວຽກງານ ຍຸຕິທຳຊາບ ພາຍໃນກຳນົດ 3 (ສາມ) ວັນ ລັດຖະການ.

ຊື່ຂອງວິສາຫະກິດກົດໝາຍ ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດກົດໝາຍ ຕ້ອງມີຄຳນຳໜ້າວ່າ "ວິສາຫະກິດກົດໝາຍ" ຕາມທີ່ກຳນົດໄວ້ໃນອະນຸຍາດດຳເນີນທຸລະກິດ.

ວິສາຫະກິດກົດໝາຍ ທີ່ໄດ້ຮັບອະນຸຍາດ ຕ້ອງເຜີຍແຜ່ ໃບອະນຸຍາດດຳເນີນທຸລະກິດຂອງຕົນພ້ອມກັນກັບໃບທະບຽນວິສາຫະກິດ.

ວິສາຫະກິດກົດໝາຍ ທີ່ໄດ້ຮັບອະນຸຍາດ ສາມາດຂໍໃຫ້ອອກໃບອະນຸຍາດໃໝ່ໄດ້ ໃນກໍລະນີທີ່ໃບອະນຸຍາດດຳເນີນທຸລະກິດ ຫາກຕົກເຮ່ຍ ຫຼື ເສຍຫາຍ ຊຶ່ງຈະຕ້ອງສະເໜີຕາມແບບພິມສະເພາະ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ສາມາດກວດກາຄວາມຖືກຕ້ອງ ຫຼື ຂໍສຳເນົາໃບອະນຸຍາດດຳເນີນທຸລະກິດກົດໝາຍໄດ້ ໂດຍບໍ່ເສຍຄ່າ ແລະ ຕ້ອງປະຕິບັດຕາມຂັ້ນຕອນ ແລະ ລະບຽບການສະເພາະ.

**ມາດຕາ 11 ລະບົບຖານຂໍ້ມູນທະບຽນວິສາຫະກິດກົດໝາຍ**

ລະບົບຖານຂໍ້ມູນກົດໝາຍ ແມ່ນລະບົບຈັດເກັບຂໍ້ມູນທີ່ກ່ຽວຂ້ອງກັບວິສາຫະກິດ ແລະ ການເຄື່ອນໄຫວຂອງກົດໝາຍ ໃນຕະຫຼອດໄລຍະ ທີ່ໄດ້ຮັບອະນຸຍາດ ທັງໃນຮູບແບບ ເອີເລັກໂຕຣນິກ ແລະ ສຳນວນເອກະສານ.

ຄ່າບໍລິການທີ່ເກັບຈາກການຂໍອະນຸຍາດດຳເນີນທຸລະກິດກົດໝາຍ ຖືກນຳໃຊ້ເຂົ້າໃນການສ້າງລະບົບຖານຂໍ້ມູນທະບຽນວິສາຫະກິດກົດໝາຍ ແລະ ການສະໜອງຂໍ້ມູນ.

## ໝວດທີ 3
## ການຕໍ່ ການອະນຸຍາດດຳເນີນທຸລະກິດ

**ມາດຕາ 12 ການຕໍ່ ການອະນຸຍາດດຳເນີນທຸລະກິດ**

ວິສາຫະກິດກົດໝາຍທີ່ມີຈຸດປະສົງຕໍ່ການອະນຸຍາດດຳເນີນທຸລະກິດ ຕ້ອງໄດ້ສະເໜີຂໍຕໍ່ການອະນຸຍາດ ລ່ວງໜ້າ 30 ວັນ ກ່ອນອາຍຸຕາມໃບອະນຸຍາດຈະສິ້ນສຸດ ຕາມຂັ້ນຕອນທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

**ມາດຕາ 13 ເອກະສານປະກອບ ເພື່ອຕໍ່ການອະນຸຍາດດຳເນີນທຸລະກິດ**

ການສະເໜີ ເພື່ອ ຂໍຕໍ່ການອະນຸຍາດດຳເນີນທຸລະກິດ ໃຫ້ປະກອບເອກະສານທັງໝົດ ລຸ່ມນີ້:

1. ຄຳຮ້ອງຕາມແບບພິມສະເພາະ;

2. ບົດລາຍງານສະຫຼຸບກ່ຽວກັບການດຳເນີນທຸລະກິດຜ່ານມາ, ລວມທັງການລາຍງານກ່ຽວກັບການໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍໂດຍບໍ່ເສຍຄ່າ ແລະ ດ້ວຍຄວາມສະໝັກໃຈ ແລະ ແຜນການດຳເນີນທຸລະກິດໃນຕໍ່ໜ້າ;

3. ສຳເນົາຢັ້ງຢືນການປະຕິບັດພັນທະທາງດ້ານການເງິນ ໃນໄລຍະຜ່ານມາ ຈາກພາກສ່ວນກ່ຽວຂ້ອງ ເຊັ່ນ ໃບຢັ້ງຢືນການມອບອາກອນເງິນເດືອນ, ອາກອນກຳໄລ ແລະ ອື່ນໆ;

4. ສຳເນົາສັນຍາອອກແຮງງານລະຫວ່າງວິສາຫະກິດ ແລະ ທະນາຍຄວາມ; ໃນກໍລະນີທະນາຍຄວາມຕ່າງປະເທດ ໃຫ້ສຳເນົາ ໃບອະນຸຍາດເຄື່ອນໄຫວວິຊາຊີບກົດໝາຍ ທີ່ອອກໂດຍກະຊວງຍຸຕິທຳ;

5. ແຜນວາດທີ່ຕັ້ງຂອງສຳນັກງານ ໂດຍມີການຢັ້ງຢືນຈາກອົງການປົກຄອງຕາແສງ ຫຼື ບ້ານທີ່ຕັ້ງຢູ່.

**ມາດຕາ 14 ເງື່ອນໄຂໃນການພິຈາລະນາການຕໍ່ ການອະນຸຍາດດຳເນີນທຸລະກິດ**

ການພິຈາລະນາ ຕໍ່ໃບອະນຸຍາດດຳເນີນທຸລະກິດ ມີເງື່ອນໄຂ ລຸ່ມນີ້:

1. ສະເໜີຄຳຮ້ອງ ແລະ ເອກະສານປະກອບ ຕາມມາດຕາ 15 ຂອງຂໍ້ຕົກລົງສະບັບນີ້ ຄົບຖ້ວນ, ຖືກຕ້ອງ ແລະ ຕົວຈິງ;

2. ການເຄື່ອນໄຫວດຳເນີນທຸລະກິດຜ່ານມາ ຖືກຕ້ອງ ຕາມການລາຍງານ ແລະ ຕາມກົດໝາຍ ທີ່ກ່ຽວຂ້ອງ;

3. ວິສາຫະກິດກົດໝາຍ ບໍ່ໄດ້ລະເມີດກົດໝາຍໃດໜຶ່ງ ຫຼື ທະນາຍຄວາມທີ່ສັງກັດວິສາຫະກິດກົດໝາຍນັ້ນ ບໍ່ໄດ້ລະເມີດຈັນຍາບັນ ຫຼື ກົດໝາຍທີ່ກ່ຽວຂ້ອງ ຕາມການຢັ້ງຢືນຂອງສະພາທະນາຍຄວາມ.

**ມາດຕາ 15 ຂັ້ນຕອນການ ຕໍ່ການອະນຸຍາດດຳເນີນທຸລະກິດ**

ການສະເໜີຂໍຕໍ່ໃບອະນຸຍາດດຳເນີນທຸລະກິດ ໃຫ້ປະຕິບັດຄ້າຍຄືກັນກັບ ຕາມຂັ້ນຕອນຕ່າງໆ ຕາມທີ່ກຳນົດໄວ້ໃນມາດຕາ 11 ຂອງຂໍ້ຕົກລົງສະບັບນີ້.

## ໝວດທີ 4
## ການສ້າງຕັ້ງສາຂາວິສາຫະກິດກົດໝາຍ

**ມາດຕາ 16 ສາຂາຂອງວິສາຫະກິດກົດໝາຍ**

ສາຂາຂອງວິສາຫະກິດກົດໝາຍ ໝາຍເຖິງ ຫ້ອງການ ຫຼື ໜ່ວຍງານໃດໜຶ່ງຂອງວິສາຫະກິດກົດໝາຍ ທີ່ຕັ້ງຢູ່ສະຖານທີ່ອື່ນ ແຕ່ນອນໃນກົງຈັກ-ການຈັດຕັ້ງ, ລະບົບບັນຊີ, ການຄຸ້ມຄອງບໍລິຫານ ຂອງວິສາຫະກິດກົດໝາຍ ແລະ ບໍ່ມີຖານະນິຕິບຸກຄົນ ແຍກຕ່າງຫາກ ຈາກວິສາຫະກິດກົດໝາຍນັ້ນ.

ວິສາຫະກິດກົດໝາຍ ທີ່ສ້າງຕັ້ງສາຂາຂອງຕົນ ທີ່ມີລັກສະນະແຍກການຈັດຕັ້ງ, ການເງິນ, ການບັນຊີ ແລະ ການຄຸ້ມຄອງບໍລິຫານ ຕ່າງຫາກ ຖືວ່າ ເປັນການສ້າງຕັ້ງຫົວໜ່ວຍວິສາຫະກິດ ແລະ ດຳເນີນທຸລະກິດກົດໝາຍ ທີ່ບໍ່ຖືກກົດໝາຍ ເປັນສາເຫດພາ ໃຫ້ວິສາຫະກິດກົດໝາຍທີ່ສ້າງຕັ້ງສາຂານັ້ນ ຖືກໂຈະ ຫຼື ຖອນໃບອະນຸຍາດດຳເນີນທຸລະກິດກົດໝາຍ.

**ມາດຕາ 17 ເງື່ອນໄຂໃນການສ້າງຕັ້ງສາຂາຂອງວິສາຫະກິດກົດໝາຍ**

ວິສາຫະກິດກົດໝາຍ ທີ່ໄດ້ຮັບອະນຸຍາດ ທີ່ມີຈຸດປະສົງ ສ້າງຕັ້ງສາຂາຂອງຕົນ ຢູ່ ແຂວງ, ນະຄອນຫຼວງ ໃນຂອບເຂດທົ່ວປະເທດ ຕ້ອງມີເງື່ອນໄຂດັ່ງນີ້:

1. ອາຍຸຂອງການໃຫ້ອະນຸຍາດດຳເນີນທຸລະກິດກົດໝາຍຍັງມີຜົນສັກສິດໃຊ້ໄດ້ ບໍ່ຫຼຸດ 6 ເດືອນ;
2. ມີທະນາຍຄວາມປະຈຳ ຢູ່ສາຂາ ຢ່າງໜ້ອຍ 2 ຄົນ;
3. ມີແຜນດຳເນີນທຸລະກິດຂອງສາຂາ ໃນໄລຍະ ສາມ ປີ ລວມທັງໂຄງຮ່າງການຈັດຕັ້ງຂອງສາຂາ ແລະ ກົດລະ ບຽບພາຍໃນຂອງສາຂາ;
4. ມີຫ້ອງການສາຂາທີ່ແນ່ນອນ;

5. ມີວັດຖຸອຸປະກອນອັນຈຳເປັນໃນການຮັບໃຊ້ບໍລິການຢູ່ສາຂາ.

**ມາດຕາ 18 ການສ້າງຕັ້ງສາຂາຂອງວິສາຫະກິດກົດໝາຍ**

ການສ້າງຕັ້ງສາຂາຂອງວິສາຫະກິດກົດໝາຍ ໃຫ້ປະຕິບັດຕາມ ກົດໝາຍ ວ່າດ້ວຍວິສາຫະກິດ, ແລະ ມີເງື່ອນໄຂຄົບຖ້ວນຕາມ ມາດຕາ 19 ຂອງຂໍ້ຕົກລົງສະບັບນີ້.

ພາຍຫຼັງທີ່ໄດ້ສ້າງຕັ້ງສາຂາແລ້ວ, ວິສາຫະກິດກົດໝາຍ ຕ້ອງໄດ້ລາຍງານໃຫ້ກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ ພາຍໃນ 5 (ຫ້າ) ວັນລັດຖະການ ນັບແຕ່ວັນທີ່ໄດ້ແຈ້ງການຕັ້ງສາຂາກັບຂະແໜງອຸດສາຫະກຳ ແລະ ການຄ້າ ກ່ຽວກັບ:

1. ສຳເນົາມະຕິຕົກລົງຂອງກອງປະຊຸມຜູ້ຖືຮຸ້ນ ຫຼື ການຕົກລົງເຫັນດີໃຫ້ສ້າງຕັ້ງສາຂາ ໃນກໍລະນີບໍລິສັດຈຳກັດຜູ້ດຽວ;
2. ປະຫວັດຫຍໍ້ຂອງຜູ້ອຳນວຍການສາຂາ ແລະ ໜັງສືແຕ່ງຕັ້ງເປັນຜູ້ອຳນວຍການສາຂາ;
3. ສຳເນົາສັນຍາແຮງງານລະຫວ່າງ ວິສາຫະກິດ ແລະ ທະນາຍຄວາມ ປະຈຳສາຂາ;
4. ສຳເນົາແຜນດຳເນີນທຸລະກິດຂອງສາຂາ;
5. ສຳເນົາ ກົດລະບຽບພາຍໃນຂອງສາຂາ;
6. ແຜນວາດທີ່ຕັ້ງຂອງສຳນັກງານ ໂດຍມີການຢັ້ງຢືນຈາກອົງການປົກຄອງຕາແສງ ຫຼື ບ້ານທີ່ຕັ້ງຢູ່.

ພາຍຫຼັງທີ່ໄດ້ຮັບແຈ້ງແລ້ວ, ກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ ຕ້ອງປັບປຸງລະບົບຖານຂໍ້ມູນວິສາຫະກິດກົດໝາຍ ແລະ ແຈ້ງໃຫ້ພະແນກຍຸຕິທຳແຂວງ ແລະ ຫ້ອງການຍຸຕິທຳເມືອງ ກ່ຽວກັບສາຂາດັ່ງກ່າວ ເພື່ອຕິດຕາມ ແລະ ຄຸ້ມຄອງສາຂາວິສາຫະກິດກົດໝາຍດັ່ງກ່າວ ຕາມພາລະບົດບາດຂອງຕົນ.

ຫ້ອງການສາຂາຂອງວິສາຫກິດກົດໝາຍຕ້ອງສະແດງ ຫຼື ເຜີຍແຜ່ໃບອະນຸຍາດດຳເນີນທຸລະກິດກົດໝາຍ ຂອງສຳນັກງານໃຫຍ່ ເພື່ອແຈ້ງໃຫ້ສາທາລະນະຊາບ.

**ມາດຕາ 19 ຄວາມຮັບຜິດຊອບທາງດ້ານກົດໝາຍຂອງວິສາຫະກິດ ແລະ ສາຂາ**

ການດຳເນີນທຸລະກິດຂອງສາຂາວິສາຫະກິດກົດໝາຍທີ່ບໍ່ຖືກຕ້ອງ, ສໍ້ໂກງ ຫຼື ລະເມີດກົດໝາຍ ເປັນສາເຫດພາໃຫ້ວິສາຫະກິດກົດໝາຍຖືກໂຈະ ຫຼື ຖອນໃບອະນຸຍາດດຳເນີນທຸລະກິດ ແລະ ມີຄວາມຮັບຜິດຊອບຕາມກົດໝາຍ.

ການຕໍ່ໃບອະນຸຍາດດຳເນີນທຸລະກິດກົດໝາຍ ມີຜົນ ຕໍ່ສາຂາຂອງວິສາຫະກິດກົດໝາຍ.

## ໝວດທີ 5
## ການລາຍງານປະຈຳປີ
## ກ່ຽວກັບການດຳເນີນທຸລະກິດຂອງວິສາຫະກິດກົດໝາຍ

**ມາດຕາ 20 ການລາຍງານປະຈຳປີ**

ການລາຍງານປະຈຳປີ ກ່ຽວກັບການດຳເນີນທຸລະກິດ ຂອງວິສາຫະກິດກົດໝາຍ ລວມທັງສາຂາ (ຖ້າມີ) ແມ່ນການລາຍງານສະພາບການດຳເນີນທຸລະກິດປະຈຳປີ ຕາມເນື້ອໃນທີ່ໄດ້ກຳນົດໄວ້ໃນມາດຕາ 23 ຂອງຂໍ້ຕົກລົງສະບັບນີ້ ເພື່ອໃຫ້ກະຊວງຍຸຕິທຳ ໄດ້ສາມາດຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດກົດໝາຍ ຂອງວິສາຫະກິດກົດໝາຍ.

ການລາຍງານກ່ຽວກັບການດຳເນີນທຸລະກິດຂອງວິສາຫະກິດ ໃຫ້ລາຍງານເປັນປົກກະຕິ ແຕ່ລະປີພາຍໃນກຳນົດເວລາ 30 ວັນ ລັດຖະການ ນັບແຕ່ມື້ ປິດບັນຊີປະຈຳປີ ຕາມກົດໝາຍວ່າດ້ວຍການບັນຊີ.

ການບໍ່ລາຍງານ ເປັນສາເຫດໃຫ້ ວິສາຫະກິດກົດໝາຍນັ້ນຖືກຕັກເຕືອນ ແລະ ຖ້າບໍ່ປະຕິບັດຕາມການຕັກເຕືອນ ພາໃຫ້ວິສາຫະກິດກົດໝາຍນັ້ນຖືກໂຈະການດຳເນີນທຸລະກິດກົດໝາຍ.

**ມາດຕາ 21 ເນື້ອໃນຂອງບົດລາຍງານປະຈໍາປີ**

ການລາຍງານປະຈໍາປີ ກ່ຽວກັບການດໍາເນີນທຸລະກິດ ຂອງວິສາຫະກິດກົດໝາຍ ປະກອບມີເນື້ອໃນ ດັ່ງນີ້:

1. ລາຍງານສະພາບລວມທົ່ວໄປຂອງການເຄື່ອນໄຫວດໍາເນີນທຸລະກິດຂອງວິສາຫະກິດ ໃນນີ້ ລວມມີ ການຈັດຕັ້ງ ແລະ ພະນັກງານ, ການໃຫ້ການບໍລິການທາງດ້ານກົດໝາຍຕໍ່ລູກຄ້າ, ສະຖິຕິການໃຫ້ການບໍລິການທາງດ້ານກົດໝາຍໂດຍບໍ່ເສຍຄ່າ ຫຼື ໂດຍສະໝັກໃຈ;
2. ການລາຍງານການປະຕິບັດພັນທະທາງດ້ານການເງິນ ເຊັ່ນ ການເສຍອາກອນຕ່າງໆ, ການເສຍເງິນບໍາລຸງການເປັນສະມາຊິກທະນາຍຄວາມ;
3. ຂໍ້ສະເໜີ ຕໍ່ກະຊວງຍຸຕິທໍາ ແລະ ພາກສ່ວນກ່ຽວຂ້ອງກ່ຽວກັບການຈັດຕັ້ງປະຕິບັດຜ່ານມາ;
4. ລາຍງານແຜນດໍາເນີນທຸລະກິດໃນປີຖັດໄປ.

ບັນດາເນື້ອໃນທີ່ກ່າວມານີ້ ຕ້ອງມີສໍາເນົາເອກະສານຢັ້ງຢືນການລາຍງານແຕ່ລະເນື້ອໃນ.

**ມາດຕາ 22 ຜົນການລາຍງານປະຈໍາປີ**

ການລາຍງານປະຈໍາປີ ເປັນຂໍ້ມູນພື້ນຖານ ໃຫ້ແກ່ການຕິດຕາມ, ກວດກາ ແລະ ກວດສອບ ການຈັດຕັ້ງປະຕິບັດກົດໝາຍທີ່ກ່ຽວຂ້ອງກັບການດໍາເນີນທຸລະກິດກົດໝາຍ ແລະ ເປັນພື້ນຖານໃຫ້ແກ່ການພິຈາລະນາ ການຂໍຕໍ່ໃບອະນຸຍາດດໍາເນີນທຸລະກິດກົດໝາຍ.

ການບໍ່ລາຍງານ ເປັນສາເຫດໃຫ້ ວິສາຫະກິດກົດໝາຍນັ້ນຖືກຕັກເຕືອນ ແລະ ຖ້າບໍ່ປະຕິບັດຕາມການຕັກເຕືອນ ພາໃຫ້ວິສາຫະກິດກົດໝາຍນັ້ນຖືກໂຈະການດໍາເນີນທຸລະກິດກົດໝາຍ.

## ໝວດທີ 6
## ການຕິດຕາມ ແລະ ກວດກາ ວິສາຫະກິດກົດໝາຍ

**ມາດຕາ 23 ການຕິດຕາມ ແລະ ກວດກາ ວິສາຫະກິດກົດໝາຍ**

ການຕິດຕາມ ແລະ ກວດກາ ການດໍາເນີນທຸລະກິດກົດໝາຍ ຂອງວິສາຫະກິດກົດໝາຍ ໝາຍເຖິງການກວດສອບ ການໃຫ້ບໍລິການທາງດ້ານກົດໝາຍຂອງວິສາຫະກິດດັ່ງກ່າວ ເພື່ອຮັບປະກັນຄວາມຖືກຕ້ອງຕາມມາດຕະຖານວິຊາຊີບ-ຈັນຍາບັນດ້ານວິຊາຊີບ ແລະ ກົດໝາຍທີ່ກ່ຽວຂ້ອງ.

ການຕິດຕາມ ແລະ ກວດກາ ດໍາເນີນ 3 ຮູບການຄື:

- ການຕິດຕາມ ແລະ ກວດກາ ຕາມເອກະສານ;
- ການຕິດຕາມ ແລະ ກວດກາ ຕາມການສະເໜີ;
- ການຕິດຕາມ ແລະ ກວດກາ ກັບທີ່.

ການຕິດຕາມ ແລະ ກວດກາ ວິສາຫະກິດກົດໝາຍ ໃຫ້ປະຕິບັດຕາມ ມາດຕາ 71, 72, 73 ແລະ 74 ຂອງກົດໝາຍວ່າດ້ວຍທະນາຍຄວາມ ແລະ ຂໍ້ຕົກລົງສະບັບນີ້.

**ມາດຕາ 24 ການຕິດຕາມ ແລະ ກວດກາ ຕາມເອກະສານ**

ການຕິດຕາມ ແລະ ກວດກາ ຕາມເອກະສານ ໝາຍເຖິງ ການກວດກາ ຄວາມຖືກຕ້ອງ ແລະ ຄວາມເປັນຈິງຂອງບົດລາຍງານປະຈໍາປີກ່ຽວກັບການດໍາເນີນທຸລະກິດກົດໝາຍຂອງວິສາຫະກິດກົດໝາຍ ເພື່ອ ເປັນພື້ນຖານໃນການພິຈາລະນາ ການສະເໜີຂໍຕໍ່ການອະນຸຍາດດໍາເນີນທຸລະກິດຂອງວິສາຫະກິດ ຫຼື ໃນກໍລະນີທີ່ສົງໄສ ຫຼື ມີຂໍ້ມູນເຊື່ອວ່າ ວິສາຫະກິດກົດໝາຍໄດ້ລະເມີດກົດໝາຍ ຫຼື ນິຕິກໍາກ່ຽວຂ້ອງ.

**ມາດຕາ 25 ການຕິດຕາມ ແລະ ກວດກາ ຕາມການສະເໜີ**

ການຕິດຕາມ ແລະ ກວດກາ ຕາມການສະເໜີ ໝາຍເຖິງບັນດາຮູບການກ່ຽວກັບການກວດກາ ທີ່ກຳນົດໄວ້ໃນມາດຕາ 78 ຂອງກົດໝາຍວ່າດ້ວຍທະນາຍຄວາມ ຊຶ່ງ ອາດມີການສະເໜີໃດໜຶ່ງ ກ່ຽວຂ້ອງກັບການລະເມີດ ຫຼື ການກະທຳ ທີ່ເຫັນວ່າ ບໍ່ຖືກຕ້ອງ ຂອງວິສາຫະກິດກົດໝາຍ ຄື:

- ຄຳຮ້ອງຂໍ ຫຼື ຄຳສະເໜີ ເປັນລາຍລັກອັກສອນ ຈາກຜູ້ໃຊ້ບໍລິການ;
- ຄຳສະເໜີ ເປັນລາຍລັກອັກສອນ ຈາກສະພາທະນາຍຄວາມ ຫຼື ກົມກວດກາ, ກະຊວງຍຸຕິທຳ;
- ຄຳສະເໜີເປັນລາຍລັກອັກສອນຈາກພະແນກຍຸຕິທຳແຂວງ, ນະຄອນຫຼວງ, ຫ້ອງການຍຸຕິທຳເມືອງ, ນະຄອນ ຫຼື ເທດສະບານ.

**ມາດຕາ 26 ການຕິດຕາມ ແລະ ກວດກາ ກັບທີ່**

ການຕິດຕາມ ແລະ ກວດກາ ຕາມເອກະສານ ໝາຍເຖິງ ການລົງຕິດຕາມ ແລະ ກວດກາ ສະ ຖານທີ່ຕົວຈິງ ຢູ່ ສຳນັກງານ, ຫ້ອງການສາຂາ ຂອງວິສາຫະກິດທະນາຍຄວາມ ຕາມການມອບໝາຍຂອງກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ ໃນກໍລະນີທີ່ຕ້ອງປະຕິບັດສິດ ແລະໜ້າທີ່ຄວາມຮັບຜິດຊອບ ຕາມກົດໝາຍ ຫຼື ໃນກໍລະນີທີ່ຈຳເປັນ ເຊັ່ນ:

- ການລົງຢັ້ງຢືນສະພາບ ແລະ ທີ່ຕັ້ງຂອງສຳນັກງານ, ຫ້ອງການສາຂາ;
- ການລົງກວດກາຈຳນວນ ທະນາຍຄວາມຕົວຈິງ ຂອງວິສາຫະກິດກົດໝາຍ ແລະ ສາຂາ;
- ການລົງເກັບກຳຂໍ້ມູນ ສະພາບການໃຫ້ບໍລິການ ແລະ/ຫຼື ການລະເມີດຂອງວິສາຫະກິດກົດໝາຍ ແລະ ສາຂາ ກັບຜູ້ໃຊ້ບໍລິການ ຫຼື ຮັບບໍລິການຊ່ວຍເຫຼືອທາງດ້ານກົດໝາຍໂດຍບໍ່ເສຍຄ່າ ຫຼື ສະໝັກໃຈ.

ພະແນກຍຸຕິທຳແຂວງ, ນະຄອນຫຼວງ, ຫຼື ຫ້ອງການຍຸຕິທຳເມືອງ, ນະຄອນ ຫຼື ເທດສະບານ ເປັນຜູ້ຮັບຜິດຊອບ ລົງຕິດຕາມ ແລະ ກວດກາ ກັບທີ່ ໂດຍການມອບໝາຍຈາກກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ.

ພາຍຫຼັງສຳເລັດການກວດກາກັບທີ່ ພະນັກງານທີ່ຖືກແຕ່ງຕັ້ງໃຫ້ຮັບຜິດຊອບ ຕ້ອງສ້າງບົດບັນທຶກຮ່ວມກັບວິສາຫະກິດກົດໝາຍດັ່ງກ່າວ ເພື່ອເປັນຂໍ້ມູນຫຼັກຖານ ໃນການພິຈາລະນາຕາມຂັ້ນຕອນຂອງກົດໝາຍ.

**ມາດຕາ 27 ການມອບໝາຍໃຫ້ຂະແໜງຍຸຕິທຳຕິດຕາມ ແລະ ກວດກາ**

ໃນການຕິດຕາມ ແລະ ກວດກາ ການເຄື່ອນໄຫວຂອງວິສາຫະກິດກົດໝາຍ ຕາມມາດຕາ 73 ແລະ 74 ຂອງກົດໝາຍວ່າດ້ວຍທະນາຍຄວາມ ແລະ ຕາມທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້, ກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ ແຈ້ງໃຫ້ ພະແນກຍຸຕິທຳແຂວງ, ນະຄອນຫຼວງ, ຫຼື ຫ້ອງການຍຸຕິທຳເມືອງ ຫຼື ນະຄອນ, ເທດສະບານ ຕິດຕາມ ແລະ ກວດກາ ວິສາຫະກິດກົດໝາຍ ທີ່ຕັ້ງຢູ່ໃນເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

- ກວດກາ ແລະ ຢັ້ງຢືນທີ່ຕັ້ງ ແລະ ສະພາບທະນາຍຄວາມ ຢູ່ ສຳນັກງານ ແລະ ສາຂາຂອງວິສາຫະກິດກົດໝາຍ;
- ຕິດຕາມການເຄື່ອນໄຫວຂອງວິສາຫະກິດກົດໝາຍ ເປັນແຕ່ລະໄລຍະ ແລະ ໃນກໍລະນີທີ່ເຫັນວ່າ ວິສາຫະກິດກົດໝາຍ ຫຼື ທະນາຍຄວາມທີ່ສັງກັດວິສາຫະກິດກົດໝາຍນັ້ນ ອາດລະເມີດ ກົດໝາຍ, ຈັນຍາບັນ ຫຼື ນິຕິກຳໃດໜຶ່ງ ໃຫ້ແຈ້ງໃຫ້ກົມ ຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ ຊາບ ເປັນລາຍລັກອັກສອນໂດຍໄວ;
- ໃນກໍລະນີທີ່ ສົງໄສວ່າ ວິສາຫະກິດໃດໜຶ່ງ ໄດ້ອ້າງວ່າໄດ້ຮັບການອະນຸຍາດດຳເນີນທຸລະກິດກົດໝາຍ ຫຼື ວິສາຫະກິດທີ່ບໍ່ໄດ້ຮັບອະນຸຍາດ ແຕ່ເຄື່ອນໄຫວ ດຳເນີນທຸລະກິດກົດໝາຍ, ໃຫ້ແຈ້ງກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ ຊາບ ເປັນລາຍລັກອັກສອນ;

- ປະຕິບັດການຕິດຕາມ ແລະ ກວດກາ ຕາມແຈ້ງການຂອງກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ ກ່ຽວກັບການເຄື່ອນໄຫວ, ດຳເນີນທຸລະກິດກົດໝາຍຂອງວິສາຫະກິດກົດໝາຍໃດໜຶ່ງ.

**ມາດຕາ 28 ການປະສານງານກັບພາກສ່ວນກ່ຽວຂ້ອງ**

ກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ ຫຼື ພະແນກຍຸຕິທຳແຂວງ, ນະຄອນຫຼວງ, ຫຼື ຫ້ອງການຍຸຕິທຳເມືອງ ຫຼື ນະຄອນ, ເທດສະບານ ຕາມການມອບໝາຍຂອງກົມຄຸ້ມຄອງ ແລະ ສົ່ງເສີມຍຸຕິທຳ ບົນພື້ນຖານມາດຕາ 73, 74 ແລະ ມາດຕາ 75 ຂອງກົດໝາຍວ່າດ້ວຍທະນາຍຄວາມ ມີສິດ ແລະ ໜ້າທີ່ ປະສານສົມທົບກັບຂະແໜງການກ່ຽວຂ້ອງ ຕາມຂອບເຂດສິດອຳນາດຂອງຕົນ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ແລະ ການເຄື່ອນໄຫວ ຂອງວິສາຫະກິດກົດໝາຍ ເຊັ່ນ: ຂະແໜງການສວຍສາອາກອນ, ທະບຽນວິສາຫະກິດ, ຂະແໜງປ້ອງກັນຄວາມສະຫງົບ, ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ.

**ມາດຕາ 29 ຜົນຂອງການຕິດຕາມ ແລະ ກວດກາ**

ການຕິດຕາມ ແລະ ກວດກາ ຕາມເອກະສານ, ຕາມການສະເໜີ ຫຼື ກັບທີ່ ຕາມຂໍ້ຕົກລົງສະບັບນີ້ ມີຜົນສະທ້ອນດັ່ງນີ້:

- ໃນກໍລະນີທີ່ ເຫັນວ່າ ການລາຍງານ ຫຼື ການເຄື່ອນໄຫວ ຂອງວິສາຫະກິດກົດໝາຍ ບໍ່ຖືກຕ້ອງ ຫຼື ໃນກໍລະນີທີ່ສົງໄສ ຫຼື ມີຂໍ້ມູນເຊື່ອວ່າ ວິສາຫະກິດກົດໝາຍໄດ້ລະເມີດກົດໝາຍ ຫຼື ນິຕິກຳກ່ຽວຂ້ອງ, ບັນດາຂໍ້ມູນເຫຼົ່ານີ້ ຈະຕ້ອງສົ່ງໃຫ້ ພາກສ່ວນກ່ຽວຂ້ອງເພື່ອພິຈາລະນາດຳເນີນຕາມກົດໝາຍ;

- ໃນກໍລະນີທີ່ ເຫັນວ່າ ການລາຍງານ ຫຼື ການເຄື່ອນໄຫວ ຂອງວິສາຫະກິດກົດໝາຍ ບໍ່ກົງກັບຄວາມເປັນຈິງ, ວິສາຫະກິດກົດໝາຍດັ່ງກ່າວ ຕ້ອງໄດ້ຊີ້ແຈງ, ອະທິບາຍ ແລະ ແກ້ໄຂໃຫ້ຖືກຕ້ອງ ພາຍໃນກຳນົດເວລາ ທີ່ກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ ເຫັນວ່າເໝາະສົມ; ຖ້າຫາກບໍ່ມີການຊີ້ແຈງ, ອະທິບາຍ ຫຼື ປັບປຸງແກ້ໄຂ ຖືວ່າ ວິສາຫະກິດກົດໝາຍນັ້ນລະເມີດກົດໝາຍ ແລະ ອາດຖືກຖອນໃບອະນຸຍາດ ທັງມີຄວາມຮັບຜິດຊອບ ຕາມກົດໝາຍ.

- ໃນກໍລະນີ ຫາກພົບເຫັນວ່າ ທະນາຍຄວາມໃດໜຶ່ງ ທີ່ສັງກັດວິສາຫະກິດກົດໝາຍ ຫຼື ສາຂາຂອງວິສາຫະກິດກົດໝາຍ ຫາກມີພຶດຕະກຳທີ່ບໍ່ເໝາະສົມ ຫຼື ເປັນການລະເມີດຈັນຍາບັນ ຫຼື ກົດໝາຍ, ຂໍ້ມູນດັ່ງກ່າວ ຈະຖືກສົ່ງໃຫ້ສະພາທະນາຍຄວາມ ເພື່ອຕິດຕາມແກ້ໄຂ.

## ໝວດທີ 7
## ການໂຈະ ແລະ ຖອນການອະນຸຍາດດຳເນີນທຸລະກິດກົດໝາຍ

**ມາດຕາ 30 ການໂຈະການດຳເນີນທຸລະກິດກົດໝາຍ**

ໃນການໂຈະການ ດຳເນີນທຸລະກິດກົດໝາຍ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 61 ຂອງກົດໝາຍວ່າດ້ວຍທະນາຍຄວາມ, ໃຫ້ປະຕິບັດຕາມ ຂັ້ນຕອນ ແລ້ວແຕ່ກໍລະນີ ດັ່ງນີ້:

1. ໃນກໍລະນີ ທີ່ວິສາຫະກິດກົດໝາຍ ສະເໜີໂຈະການດຳເນີນທຸລະກິດກົດໝາຍ ຢ່າງເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ, ກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ ຕ້ອງຄົ້ນຄວ້າຄຳສະເໜີດັ່ງກ່າວ ພາຍໃນເວລາ 3 (ສາມ) ວັນລັດຖະການ ນັບແຕ່ວັນໄດ້ຮັບໜັງສືສະເໜີຈາກ ວິສາຫະກິດກົດໝາຍ;
2. ໃນກໍລະນີ ທີ່ມີເງື່ອນໄຂໃນການໂຈະ ໃບອະນຸຍາດດຳເນີນທຸລະກິດກົດໝາຍ ຕາມ ຂໍ້ 2, 3, 4, ແລະ 5 ຕາມທີ່ກຳນົດໄວ້ໃນວັກໜຶ່ງ ແລະ ວັກສອງ ຂອງມາດຕາ 61 ຂອງກົດໝາຍ ວ່າດ້ວຍທະນາຍຄວາມ, ກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ ຕ້ອງໄດ້ແຈ້ງການເປັນລາຍລັກອັກສອນກ່ຽວກັບລະເມີດ ໃຫ້ວິສາຫະກິດກົດໝາຍ ທີ່ກ່ຽວຂ້ອງ ຮັບຮູ້ ພ້ອມດ້ວຍກຳນົດເວລາ ທີ່ເໝາະສົມ ແຕ່ບໍ່ເກີນ 60 ວັນລັດຖະການ ເພື່ອປັບປຸງແກ້ໄຂ. ກໍລະນີບໍ່ສາມາດແກ້ໄຂຕາມກຳນົດເວລາ ທີ່ໄດ້ແຈ້ງໃຫ້ຊາບແລ້ວນັ້ນ, ໃຫ້ກົມຄຸ້ມຄອງ ແລະ ສົ່ງເສີມວຽກງານ

ຍຸຕິທຳ ສະເໜີ ລັດຖະມົນຕີກະຊວງຍຸຕິທຳ ອອກຂໍ້ຕົກລົງ ໂຈະ ການດຳເນີນທຸລະກິດ ກົດໝາຍ ຂອງ ວິສາຫະກິດນັ້ນ ພາຍໃນ 3 (ສາມ) ວັນລັດຖະການ.

3. ວິສາຫະກິດທີ່ຖືກໂຈະການດຳເນີນທຸລະກິດກົດໝາຍ ຫາກບໍ່ໄດ້ປັບປຸງແກ້ໄຂບັນຫາທີ່ເປັນສາເຫດຂອງການໂຈະ ນັບແຕ່ ວັນທີ່ຖືກໂຈະການດຳເນີນທຸລະກິດ ໃນເວລາອັນຄວນ ແຕ່ບໍ່ເກີນ 60 ວັນ ລັດຖະການ, ວິສາຫະກິດກົດໝາຍດັ່ງກ່າວຈະຖອນໃບອະນຸຍາດ ແລະ ຖືກລຶບຊື່ອອກຈາກລະບົບຖານຂໍ້ມູນທະບຽນວິສາຫະກິດກົດໝາຍ.

**ມາດຕາ 31 ການຖອນໃບອະນຸຍາດ ແລະ ລຶບຊື່ວິສາຫະກິດກົດໝາຍ**

ເມື່ອເຫັນວ່າ ວິສາຫະກິດກົດໝາຍ ຫາກມີເງື່ອນໄຂໃດໜຶ່ງ ຕາມທີ່ກຳນົດໄວ້ໃນມາດຕາ 62 ຂອງກົດໝາຍ ວ່າດ້ວຍທະນາຍຄວາມ, ກົມຄຸ້ມຄອງ ແລະ ສົ່ງເສີມລະບົບຍຸຕິທຳ ຄົ້ນຄວ້າ ແລະ ສະເໜີລັດຖະມົນຕີກະຊວງຍຸຕິທຳ ພິຈາລະນາ ຖອນໃບອະນຸຍາດດຳເນີນທຸລະກິດກົດໝາຍ.

ພາຍຫຼັງທີ່ຖອນວິສາຫະກິດກົດໝາຍແລ້ວ ກົມຄຸ້ມຄອງ ແລະ ສົ່ງເສີມລະບົບຍຸຕິທຳ ຕ້ອງລຶບຊື່ວິສາຫະກິດດັ່ງກ່າວ ອອກຈາກ ລະບົບຖານຂໍ້ມູນວິສາຫະກິດກົດໝາຍ ພ້ອມທັງແຈ້ງ ກະຊວງອຸດສາຫະກຳ ແລະ ການຄ້າ ພາຍໃນກຳນົດ 3 (ສາມ) ວັນ ທາງລັດຖະການ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 32 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ ໂຄສະນາເຜີຍແຜ່ຂໍ້ຕົກລົງສະບັບນີ້ ໃຫ້ສັງຄົມຢ່າງກວ້າງຂວາງ ແລະ ເປັນເຈົ້າການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໂດຍປະສານສົມທົບກັບສະພາທະນາຍຄວາມ ແລະ ພາກສ່ວນກ່ຽວຂ້ອງ.

ຫ້ອງການ, ບັນດາກົມ, ກອງ, ແລະ ຫ້ອງ; ສະຖາບັນຍຸຕິທຳແຫ່ງຊາດ ແລະ ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະພາກສ່ວນກ່ຽວຂ້ອງຈົ່ງຮັບຮູ້ ແລະປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 33 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດໃນວັນທີ ____ ເດືອນ ກຸມພາ ປີ 2026.

ຂໍ້ຂໍ້ຕົກລົງສະບັບນີ້ບໍ່ມີຜົນສັກສິດຍ້ອນຫຼັງ. ບັນດາວິສາຫະກິດກົດໝາຍທີ່ໄດ້ຮັບການອະນຸຍາດໄປກ່ອນແລ້ວ ສາມາດສະເໜີ ປັບປຸງການອະນຸຍາດຕາມຂໍ້ຕົກລົງສະບັບນີ້ ດ້ວຍຄວາມສະໝັກໃຈ..

**ລັດຖະມົນຕີ,**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງຍຸຕິທຳ
ກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ ເລກທີ /ກຄສຍ.

ນະຄອນຫຼວງວຽງຈັນ, ວັນທີ

**ບົດສະເໜີກ່ຽວກັບ**
**ຮ່າງຂໍ້ຕົກລົງວ່າດ້ວຍການອະນຸຍາດດຳເນີນທຸລະກິດ ແລະ ການຄຸ້ມຄອງ ວິສາຫະກິດກົດໝາຍ**

- ອີງຕາມ ກົດໝາຍວ່າດ້ວຍທະນາຍຄວາມ,ສະບັບເລກທີ 23/ສພຊ, ລົງວັນທີ 29 ທັນວາ 2022;
- ອີງຕາມຂໍ້ຕົກລົງຂອງລັດຖະມົນຕີກະຊວງຍຸຕິທຳວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ, ສະບັບເລກທີ 441/ກຍ, ລົງວັນທີ 21 ເມສາ 2022.
- ອີງຕາມຂໍ້ຕົກລົງ

ບົນພື້ນຖານບົດຮຽນທີ່ຖອດຖອນ ຈາກການອະນຸຍາດດຳເນີນທຸລະກິດ ແລະ ຄຸ້ມຄອງການເຄື່ອນໄຫວວິສາຫະກິດກົດໝາຍ ໃນໄລຍະຜ່ານມາ, ກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ ຂໍສະເໜີຮ່າງຂໍ້ຕົກລົງວ່າດ້ວຍການອະນຸຍາດດຳເນີນທຸລະກິດ ແລະ ການຄຸ້ມຄອງວິສາຫະກິດກົດໝາຍ ຊຶ່ງໃນບົດສະເໜີນີ້ປະກອບດ້ວຍ III ເນື້ອໃນຄື:

I. ຄວາມຈຳເປັນໃນການສ້າງຂໍ້ຕົກລົງວ່າດ້ວຍການອະນຸຍາດດຳເນີນທຸລະກິດ ແລະ ການຄຸ້ມຄອງວິສາຫະກິດກົດໝາຍ.
II. ໂຄງສ້າງ, ເນື້ອໃນຂອງຮ່າງຂໍ້ຕົກລົງ, ແລະ ຂະບວນການທາບທາມປະກອບຄຳເຫັນ.
III. ຄາດຄະເນ ຜົນປະໂຫຍດ ທີ່ຈະໄດ້ຈາກການສ້າງຂໍ້ຕົກລົງວ່າດ້ວຍການອະນຸຍາດດຳເນີນທຸລະກິດ ແລະ ການຄຸ້ມຄອງວິສາຫະກິດກົດໝາຍ.

## I. ຄວາມຈຳເປັນໃນການສ້າງຂໍ້ຕົກລົງວ່າດ້ວຍການອະນຸຍາດດຳເນີນທຸລະກິດ ແລະ ການຄຸ້ມຄອງວິສາຫະກິດກົດໝາຍ

ການດຳເນີນຄະດີຕາມຂະບວນການຍຸຕິທຳ ແມ່ນການເພີ່ມທະວີການຄຸ້ມຄອງລັດ ຄຸ້ມຄອງສັງຄົມດ້ວຍລັດຖະທຳມະນູນ ແລະ ກົດໝາຍ ພາຍໃຕ້ການນຳພາຂອງພັກ. ທະນາຍຄວາມ, ສະພາທະນາຍຄວາມ ແລະ ວິສາຫະກິດກົດໝາຍ ເປັນອົງການໜຶ່ງ ໃນຂະບວນການຍຸຕິທຳ ໄປຄຽງຄູ່ກັບ ສານປະຊາຊົນ, ອົງການໄອຍະການປະຊາຊົນ, ກະຊວງປ້ອງກັນຄວາມສະຫງົບ ແລະ ກະຊວງຍຸຕິທຳ. ຍ້ອນເຫັນໄດ້ຄວາມໝາຍ ແລະ ຄວາມສຳຄັນແນວນັ້ນ ພັກ ແລະ ລັດຖະບານ ຈຶ່ງໄດ້ມີແນວທາງ, ນະໂຍບາຍ, ມະຕິ, ຄຳສັ່ງ ແລະ ກົດໝາຍ ດັດປັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ທະນາຍຄວາມ ແລະ ການຈັດຕັ້ງຂອງທະນາຍຄວາມ: ສະພາທະນາຍຄວາມ ແລະ ວິສາຫະກິດກົດ

ໝາຍ ເປັນແຕ່ລະໄລຍະ, ອັນພົ້ນເດັ່ນ ມະຕິຂອງກົມການເມືອງສູນກາງພັກ ວ່າດ້ວຍການຍົກສູງຄຸນນະພາບການດໍາເນີນຄະດີຕາມຂະບວນການຍຸຕິທໍາ, ເລກທີ 112/ກມສພ, ລົງວັນທີ 2 ມິຖຸນາ 2020 ແລະ ກົດໝາຍວ່າດ້ວຍທະນາຍຄວາມ (ສະບັບປັບປຸງ), ເລກທີ 23/ສພຊ, ລົງວັນທີ 29 ທັນວາ 2022. ກ່ອນການສ້າງ ແລະ ປັບປຸງ ກົດໝາຍທະນາຍຄວາມ, ເລກທີ 10/ສພຊ, ລົງວັນທີ 21 ທັນວາ 2011, ໃນປີ 2007 ກະຊວງຍຸຕິທໍາ ໄດ້ອອກຂໍ້ຕົກລົງຂອງລັດຖະມົນຕີກະຊວງຍຸຕິທໍາ ວ່າດ້ວຍ ການສ້າງຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການ ທີ່ປຶກສາກົດໝາຍ, ເລກທີ 178/ກຍ, ລົງວັນທີ 18 ກັນຍາ 2007.

ຜ່ານຂະບວນການພັດທະນາ ແລະ ຈັດຕັ້ງປະຕິບັດວຽກງານທະນາຍຄວາມ ແລະ ວິສາຫະກິດກົດໝາຍ ໃນໄລຍະຜ່ານມາ, ມາຮອດປັດຈຸບັນ ຈໍານວນວິສາຫະກິດກົດໝາຍ ໄດ້ຮັບການສ້າງຕັ້ງ ຂຶ້ນຈໍານວນ 192 ບໍລິສັດ, ໃນນີ້ ຫົວໜ່ວຍ ວິສາຫະກິດລາວ 149 ຫົວໜ່ວຍ ແລະ ຫົວໜ່ວຍວິສາຫະກິດຄົນຕ່າງປະເທດ 52 ຫົວໜ່ວຍ.

ເຖິງຢ່າງໃດກໍຕາມ ຜ່ານການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກໍາໃຕ້ກົດໝາຍ ໃນຕົວຈິງ, ການໃຫ້ອະນຸຍາດ ແລະ ການຄຸ້ມຄອງການເຄື່ອນໄຫວວິສາຫະກິດກົດໝາຍ ຍັງພົບຫຼາຍບັນຫາ ທີ່ພາໃຫ້ການຈັດຕັ້ງປະຕິບັດມີສິດທິພາບ, ປະສິດທິຜົນ ແລະ ຄຸນນະພາບທີ່ສູງເທົ່າທີ່ຄວນ ເປັນຕົ້ນ ກົດໝາຍວ່າດ້ວຍທະນາຍຄວາມ ກໍານົດບໍ່ຈະແຈ້ງ, ບໍ່ຮັດກຸມ ແລະ ມີຊ່ອງຫວ່າງ; ຂໍ້ຕົກລົງ 178/ກຍ ບໍ່ສອດຄ່ອງກັບກົດໝາຍທີ່ປັບປຸງ ແລະ ປະກາດໃຊ້ ແລະ ບໍ່ໄດ້ມີການກໍານົດເນື້ອໃນ ແລະ ການມອບໜ້າທີ່ຄວາມຮັບຜິດຊອບຢ່າງຈະແຈ້ງໃນຂະແໜງການຍຸຕິທໍາ ໃນການຕິດຕາມ ກວດກາ ແລະ ນໍາໃຊ້ມາດຕະການຕາມກົດໝາຍ ຈຶ່ງເປັນສາເຫດໃຫ້ເກີດມີສະພາບ:

1. ເກີດມີປາກົດການເຊື່ອງອໍາການໃຫ້ເຊົ່າ ຫຼື ໂອນກິດຈະການ ກໍຄືການອະນຸຍາດໃຫ້ບຸກຄົນ ຫຼື ນິຕິບຸກຄົນ ອື່ນ ທັງທີ່ກົດໝາຍໄດ້ຫ້າມ;
2. ວິສາຫະກິດກົດໝາຍ ຈໍານວນໜຶ່ງ ທີ່ໄດ້ຮັບອະນຸຍາດ ໄດ້ລະເມີດກົດໝາຍ ເຊັ່ນ ສືບຕໍ່ເຄື່ອນໄຫວດໍາເນີນທຸລະກິດກົດໝາຍ ເຖິງວ່າການອະນຸຍາດສິ້ນສຸດ ແລະ ບໍ່ຂໍຕໍ່ການອະນຸຍາດ;; ບໍ່ມີທະນາຍຄວາມປະຈໍາ ແລະ ອື່ນໆ;
3. ວິສາຫະກິດກົດໝາຍ ບໍ່ໄດ້ຖືບັນຊີ ຕາມກົດໝາຍບັນຊີ, ບໍ່ໄດ້ປະຕິບັດກົດໝາຍວ່າດ້ວຍອາກອນລາຍໄດ້ ແລະ ອາກອນມູນຄ່າເພີ່ມ ຕໍ່ການບໍລິການຂອງຕົນ ຢ່າງຖືກຕ້ອງ ເຮັດໃຫ້ ລັດ ສູນເສຍການເກັບອາກອນທີ່ຄວນຈະໄດ້ຮັບຕາມກົດໝາຍ;
4. ທະນາຍຄວາມ ຈໍານວນໜຶ່ງ ລະເມີດກົດໝາຍ ຫຼື ຜິດຈັນຍາບັນທະນາຍຄວາມ ແຕ່ຖືກແກ້ໄຂຊັກຊ້າ;
5. ບໍ່ມີການລາຍງານກ່ຽວກັບການເຄື່ອນໄຫວວິສາຫະກິດກົດໝາຍຢ່າງເປັນລະບົບ ແລະ ເນື້ອໃນການລາຍງານກໍບໍ່ເອກະພາບ;
6. ຫົວໜ້າວິສາຫະກິດ ຈໍານວນໜຶ່ງ ແອບອ້າງວ່າໄດ້ຮັບການອະນຸຍາດຕາມກົດໝາຍ ແລະ ເຄື່ອນໄຫວທດໍາເນີນທຸລະກິດກົດໝາຍ; ຫຼື ຜູ້ທີ່ໄດ້ຮັບການອະນຸຍາດ (ທີ່ບໍ່ແມ່ນທະນາຍຄວາມ) ນໍາໃຊ້ໃບອະນຸຍາດໄປເຄື່ອນໄຫວໃຫ້ການບໍລິການກົດໝາຍ ພາໃຫ້ສັງຄົມມີຄວາມເຂົ້າໃຈຜິດ ແລະ ສ້າງຜົນກະທົບຕໍ່ຊື່ສຽງ ແລະ ກຽດສັກສີຂອງວິຊາຊີບທະນາຍຄວາມ.

ຈາກຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ບາງບັນຫາທີ່ຍົກຂຶ້ນມານີ້ ຈຶ່ງມີຄວາມຈໍາເປັນຢ່າງພາວະວິໄສ ທີ່ຕ້ອງໄດ້ປັບປຸງຂໍ້ຕົກລົງຂອງລັດຖະມົນຕີກະຊວງຍຸຕິທໍາ, ເລກທີ 178/ກຍ ແລະ ດັດປັບບາງບັນຫາທີ່ເປັນຊ່ອງວ່າງ ຫຼື ບໍ່ໄດ້ກໍານົດໄວ້ໃນກົດໝາຍ ວ່າດ້ວຍ ທະນາຍຄວາມ ທີ່ກ່ຽວຂ້ອງກັບວິສາຫະກິດກົດໝາຍ.

## II. ໂຄງສ້າງ, ເນື້ອໃນຂອງຮ່າງຂໍ້ຕົກລົງ ແລະ ຂະບວນການທາບທາມປະກອບຄໍາເຫັນ

ໂດຍພື້ນຖານແລ້ວ ຮ່າງຂໍ້ຕົກລົງວ່າດ້ວຍການອະນຸຍາດດໍາເນີນທຸລະກິດ ແລະ ການຄຸ້ມຄອງວິສາຫະກິດກົດໝາຍ ຜັນຂະຫຍາຍບາງເນື້ອໃນຂອງກົດໝາຍວ່າດ້ວຍທະນາຍຄວາມ ທີ່ກ່ຽວຂ້ອງກັບການດໍາເນີນທຸລະກິດ ກົດໝາຍ ໃຫ້ມີຄວາມຊັດເຈນ, ຮັດກຸມ ແລະ ຈະແຈ້ງຂຶ້ນກວ່າເກົ່າ, ພ້ອມດຽວກັນນີ້ ໄດ້ກໍານົດຫຼັກການໃໝ່ຂຶ້ນຈໍານວນໜຶ່ງ ໂດຍສົມທຽບບົດຮຽນທີ່ຖອດຖອນໄດ້ຈາກການຄຸ້ມຄອງການເຄື່ອນໄຫວວິສາຫະກິດກົດໝາຍທີ່ຜ່ານມາ ຊຶ່ງ ຮ່າງຂໍ້ຕົກລົງ ປະກອບດ້ວຍ 8 ໝວດ ແລະ 33 ມາດຕາ ຄື:

**ໝວດທີ 1 ບົດບັນຍັດທົ່ວໄປ** ປະກອບດ້ວຍ 4 ມາດຕາ (ນັບແຕ່ມາດຕາ 1 ເຖິງມາດຕາ 4) ເວົ້າເຖິງຈຸດປະສົງ, ຄວາມ ໝາຍຂອງການອະນຸຍາດດຳເນີນທຸລະກິດກົດໝາຍ, ຫຼັກການ ແລະ ຂອບເຂດການນຳໃຊ້. ໃນນີ້ໄດ້ມີກຳນົດຄວາມໝາຍຂອງການດຳເນີນທຸລະກິດກົດໝາຍ (ໃໝ່) ເພື່ອໃຫ້ມີຄວາມຈະແຈ້ງ ແລະ ຊັດເຈນ.

**ໝວດທີ 2 ການຂໍອະນຸຍາດດຳເນີນທຸລະກິດ ແລະ ລະບົບຖານຂໍ້ມູນວິສາຫະກິດ** ປະກອບດ້ວຍ 7 ມາດຕາ (ນັບແຕ່ມາດຕາ 5 ເຖິງ ມາດຕາ 11) ເວົ້າເຖິງປະເພດການໃຫ້ບໍລິການທາງດ້ານກົດໝາຍ, ການຂໍອະນຸຍາດດຳເນີນທຸລະກິດກົດໝາຍ, ເອກະສານປະກອບ, ຂັ້ນຕອນການພິຈາລະນາ, ເນື້ອໃນໃບອະນຸຍາດດຳເນີນທຸລະກິດກົດໝາຍ, ການນຳໃຊ້ໃບອະນຸຍາດ, ການເກັບຮັກສາ ແລະ ການເຜີຍແຜ່ຂໍ້ມູນ; ແລະ ລະບົບຖານຂໍ້ມູນທະບຽນວິສາຫະກິດກົດໝາຍ ຊຶ່ງໂດຍພື້ນຖານແລ້ວຜັນຂະຫຍາຍມາຈາກມາດຕາ 20, 21, 22, 23, 57, 58, 59 ແລະ 60 ຂອງກົດໝາຍວ່າດ້ວຍທະນາຍຄວາມ ໂດຍເນັ້ນໃສ່ ອຸດຕັນ ຊ່ອງຫວ່າງ ທີ່ກຳນົດໄວ້ໃນກົດໝາຍຄື: (1). ການກຳນົດໃຫ້ ຜູ້ສະເໜີຂໍສ້າງຕັ້ງວິສາຫະກິດກົດໝາຍ ລະບຸ ປະເພດຂອງການໃຫ້ບໍລິການທາງດ້ານກົດໝາຍ (ປະເພດໃດໜຶ່ງ ຫຼື ທັງໝົດ) ຊຶ່ງເປັນພື້ນຖານສຳຄັນໃນການຕິດຕາມ ແລະ ກວດກາການເຄື່ອນໄຫວຂອງວິສາຫະກິດກົດໝາຍ; (2). ມາດຕາ 58 ຂອງກົດໝາຍ ວ່າດ້ວຍທະນາຍຄວາມ ກຳນົດເອກະສານປະກອບຄຳຮ້ອງຂໍ ໜ້ອຍເກີນໄປ ເຮັດໃຫ້ບໍ່ສາ ມາດເກັບກຳຂໍ້ມູນທີ່ຈຳເປັນຕໍ່ການຄຸ້ມຄອງວິສາຫະກິດກົດໝາຍ ຕາມຫຼັກວິຊາການໄດ້ຢ່າງມີປະສິດທິຜົນ; (3). ກຳນົດຂັ້ນຕອນໃນການພິຈາລະນາການອະນຸຍາດດຳເນີນທຸລະກິດກົດໝາຍ ໃຫ້ຈະແຈ້ງ, ຊັດເຈນ ແລະ ຮັບປະກັນຄວາມໂປ່ງໃສ ຊຶ່ງມາດຕາ 59 ຂອງກົດໝາຍວ່າດ້ວຍທະນາຍຄວາມ ກຳນົດວ່າ "***ອອກໃບອະນຸຍາດດຳເນີນທຸລະກິດ ໃຫ້ວິສາຫະກິດກົດໝາຍ ເມື່ອເຫັນວ່າ ມີເງື່ອນໄຂຄົບຖ້ວນ ພາຍໃນກຳນົດເວລາ ສິບ ວັນລັດຖະການ ນັບແຕ່ວັນ ໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ ...***" ສະນັ້ນ, ເນື້ອໃນທີ່ເພີ່ມໃໝ່ເປັນຂັ້ນຕອນກວດກາ ແລະ ກວດສອບ ຄວາມຄົບຖ້ວນ ແລະ ຖືກຕ້ອງຂອງເອກະສານ ຊຶ່ງບາງກໍລະນີ ຖ້າເອກະສານບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງ ກໍຕ້ອງໄດ້ແຈ້ງໃຫ້ປະກອບຄືນໃໝ່ໃຫ້ຄົບຖ້ວນ ແລະ ຖືກຕ້ອງ, ນີ້ເປັນການແກ້ໄຂຄວາມເຂົ້າໃຈຜິດທີ່ວ່າ "ກຳນົດເວລາ 10 ມື້ ໃຫ້ນັບແຕ່ວັນທີຍື່ນຄຳຮ້ອງ ແລະ ເອກະສານປະກອບເປັນຕົ້ນໄປ" ທັງເປັນການແກ້ໄຂທາງສຽງທີ່ເກີດຂຶ້ນກ່ຽວກັບການກົດໜ່ວງຖ່ວງດຶງເອກະສານ ແລະ ກຳນົດໃຫ້ຊັດເຈນໂປ່ງໃສຂຶ້ນ; ແລະ (4). ກົດໝາຍບໍ່ໄດ້ກຳນົດກ່ຽວກັບ ການປ່ຽນທະບຽນວິສາຫະກິດ ທີ່ມີຜົນສະທ້ອນທາງດ້ານກົດໝາຍ ຕໍ່ ໃບອະນຸຍາດດຳເນີນທຸລະກິດ ສະນັ້ນ ມາດຕາ 10 ຂອງຮ່າງຂໍ້ຕົກລົງ ໄດ້ແກ້ໄຂບັນຫາ ການເຊື່ອງອຳ, ໂອນກິດຈະການ ຫຼື ການໃຊ້ເຊົ່າໃບອະນຸຍາດ (ຊຶ່ງກົດໝາຍໄດ້ກຳນົດເປັນຂໍ້ຫ້າມ); ນອກຈາກນີ້ ຍັງກຳນົດເນື້ອໃນໃໝ່ ກ່ຽວກັບ ການເຜີຍແຜ່ ໃບອະນຸຍາດ, ການປ່ຽນແທນໃບເກົ່າຕົກເຮ່ຍ ຫຼື ເສຍຫາຍ; ແລະ ການອະນຸຍາດໃຫ້ບຸກຄົນ ຫຼື ການຈັດຕັ້ງອື່ນ ກວດກາ ແລະ ຂໍສຳເນົາໃບອະນຸຍາດດຳເນີນທຸລະກິດ ກໍເພື່ອຮັບປະກັນຄວາມໂປ່ງໃສ ແລະ ໃຫ້ພາກສ່ວນອື່ນໄດ້ຊ່ວຍກວດກາຄວາມຖືກຕ້ອງຂອງວິສາຫະກິດ ທີ່ອາດຈະບໍ່ໄດ້ຮັບອະນຸຍາດໃຫ້ດຳເນີນທຸລະກິດກົດໝາຍ.

**ໝວດທີ 3 ການຕໍ່ໃບອະນຸຍາດດຳເນີນທຸລະກິດ** ປະກອບດ້ວຍ 4 ມາດຕາ (ນັບແຕ່ມາດຕາ 12 ເຖິງມາດຕາ 15) ເວົ້າເຖິງຫຼັກການ ແລະ ຂັ້ນຕອນການຂໍຕໍ່ໃບອະນຸຍາດດຳເນີນທຸລະກິດກົດໝາຍ ຊຶ່ງເປັນການຜັນຂະຫຍາຍມາດຕາ 59 ຂອງກົດໝາຍວ່າດ້ວຍທະນາຍຄວາມ ທີ່ບໍ່ໄດ້ກຳນົດຈະ ແຈ້ງເງື່ອນໄຂ ແລະ ເອກະສານປະກອບການຂໍຕໍ່ໃບອະນຸຍາດດຳເນີນທຸລະກິດ ໃຫ້ຈະແຈ້ງ, ຊັດເຈນ ແລະ ເຂົ້າໃຈໄດ້ວ່າການຕໍ່ໃບອະນຸຍາດດຳເນີນທຸລະກິດ ຕ້ອງປະຕິບັດຂັ້ນຕອນ ແລະ ວິທີການທີ່ ຖືກຕ້ອງ ແລະ ເປັນເອກະພາບ. ນອກຈາກນີ້ ຍັງໃຫ້ວິສາຫະກິດກົດໝາຍ ທີ່ຕ້ອງການຕໍ່ໃບອະນຸຍາດດຳເນີນທຸລະກິດ ໄດ້ລາຍງານ (ພັນທະ) ກ່ຽວກັບການຊ່ວຍເຫຼືອທາງດ້ານກົດໝາຍ ດ້ວຍຄວາມສະໝັກໃຈ ແລະ ບໍ່ເສຍຄ່າ ເພື່ອສ້າງທ່າແຮງໃຫ້ແກ່ການເຂົ້າເຖິງຂະບວນການຍຸຕິທຳຫຼາຍຂຶ້ນ.

**ໝວດທີ 4 ການສ້າງຕັ້ງສາຂາວິສາຫະກິດກົດໝາຍ** ປະກອບດ້ວຍ 4 ມາດຕາ (ນັບແຕ່ມາດຕາ 16 ເຖິງມາດຕາ 19) ເວົ້າເຖິງການສ້າງຕັ້ງສາຂາຂອງວິສາຫະກິດກົດໝາຍ ຊຶ່ງກົດໝາຍວ່າດ້ວຍທະນາຍຄວາມບໍ່ໄດ້ກຳນົດ ຫຼື ດັດປັບບັນຫານີ້ (ມາດຕາ 64 ຂອງກົດໝາຍວ່າດ້ວຍທະນາຍຄວາມ ດັດປັບ ແຕ່ການສ້າງຕັ້ງສາຂາຂອງວິສາຫະກິດກົດໝາຍຕ່າງປະເທດ) ສະນັ້ນໝວດ 4 ນີ້ ເປັນຫຼັກການໃໝ່ທັງໝົດ ໂດຍດັດປັບ: (1). ຄວາມໝາຍຂອງສາຂາ ຂອງວິສາຫະກິດກົດໝາຍ ແລະ ມາດຕະການເພື່ອຫຼີກລ່ຽງການຂໍອະນຸຍາດດຳເນີນທຸລະກິດກົດໝາຍໃໝ່

ແຕ່ເຊື່ອງອຳວ່າເປັນສາຂາ; (2). ເງື່ອນໄຂເພີ່ມເຕີມ ທີ່ກົດໝາຍວ່າດ້ວຍວິສາຫະກິດ ກຳນົດແຕ່ຫຼັກການລວມໄວ້ ແຕ່ບໍ່ໄດ້ກຳນົດເງື່ອນໄຂທີ່ຈຳເປັນ ຂອງການສ້າງຕັ້ງສາຂາວິສາຫະກິດກົດໝາຍ ທີ່ມີລັກສະນະສະເພາະທາງດ້ານວິຊາຊີບ ແລະ (3). ວິທີການໃນການກວດກາ ແລະ ຄຸ້ມຄອງ ພາຍຫຼັງທີ່ໄດ້ຕັ້ງສາຂາຕາມກົດໝາຍວິສາຫະກິດແລ້ວ ແລະ ກຳນົດຄວາມຮັບຜິດຊອບຂອງວິສາຫະກິດ (ແມ່) ແລະ ສາຂາ ໃຫ້ຮັດກຸມ.

**ໝວດທີ 5 ການລາຍງານປະຈຳປີ ກ່ຽວກັບການດຳເນີນທຸລະກິດ ຂອງວິສາຫະກິດກົດໝາຍ** ປະກອບດ້ວຍ 3 ມາດຕາ (ນັບແຕ່ມາດຕາ 20 ເຖິງມາດຕາ 23) ເວົ້າເຖິງການລາຍງານສະພາບການເຄື່ອນໄຫວດຳເນີນທຸລະກິດຂອງວິສາຫະກິດກົດໝາຍ ໃຫ້ກະຊວງຍຸຕິທຳ ກໍຄືກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ ເປັນລາຍປີ ຢ່າງເປັນປົກກະຕິ ຊຶ່ງຫຼັກການທີ່ກຳນົດໄວ້ໃນໝວດນີ້ ເປັນຫຼັກການໃໝ່ທັງໝົດ ທີ່ຖອດຖອນບົດຮຽນມາຈາກການຄຸ້ມຄອງ ວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງກະຊວງການເງິນ ຊຶ່ງໃນນີ້: (1). ໄດ້ກຳນົດຄວາມໝາຍຂອງການລາຍງານ ແລະ ວິທີການລາຍງານ ໂດຍເນັ້ນໃສ່ການລາຍງານຫຼັງປິດບັນຊີປະຈຳປີ. ການກຳນົດຫຼັກການນີ້ ກໍຍ້ອນວ່າວິສາຫະກິດກົດໝາຍສ່ວນຫຼວງຫຼາຍບໍ່ໄດ້ຖືບັນຊີຕາມກົດໝາຍ ແລະ ບໍ່ໄດ້ເສຍອາກອນຕ່າງໆ ຕາມກົດໝາຍ ເທົ່າທີ່ຄວນ, ນີ້ເປັນການບັງຄັບໃຫ້ວິສາຫະກິດກົດໝາຍຖືບັນຊີການເງິນ ຕາມກົດໝາຍ ເພື່ອສ້າງເງື່ອນໄຂໃນການກວດສອບ ແລະ ກວດກາການຈ່າຍອາກອນຕ່າງໆ ໃຫ້ຖືກຕ້ອງຕາມກົດໝາຍອາກອນກຳໄລ, ອາກອນລາຍໄດ້ ແລະ ອາກອນມູນຄ່າເພີ່ມ (ຊຶ່ງລັດ ສູນເສຍອາກອນເຫຼົ່ານີ້ຈຳນວນຫຼວງຫຼາຍ-ເຖິງຢ່າງໃດກໍຕາມເປັນການຄາດຄະເນ ຍ້ອນຍັງບໍ່ໄດ້ເກັບກຳຂໍ້ມູນ ແລະ ວິເຄາະວິໄຈຂໍ້ມູນໃນດ້ານນີ້ຢ່າງຊັດເຈນ); (2). ກຳນົດເນື້ອໃນຂອງການລາຍງານ ແລະ (3). ກຳນົດຫຼັກການກ່ຽວກັບຜົນຂອງການລາຍງານ ຊຶ່ງຈະເປັນພື້ນຖານບ່ອນອີງໃນການຕິດຕາມ ແລະ ກວດກາການເຄື່ອນໄຫວດຳເນີນທຸລະກິດຂອງວິສາຫະກິດກົດໝາຍ.

**ໝວດທີ 6 ການຕິດຕາມ ແລະ ກວດກາວິສາຫະກິດກົດໝາຍ** ປະກອບດ້ວຍ 7 ມາດຕາ (ນັບແຕ່ມາດຕາ 23 ເຖິງມາດຕາ 29) ເວົ້າເຖິງການຕິດຕາມ ແລະ ກວດກາວິສາຫະກິດກົດໝາຍ ຊຶ່ງເປັນການຜັນຂະຫຍາຍມາຈາກມາດຕາ 72, 73, 74, 75, 77 ແລະ 78 ຂອງກົດໝາຍວ່າດ້ວຍທະນາຍຄວາມ ເພື່ອໃຫ້ມີຄວາມຊັດເຈນ ແລະ ຈະແຈ້ງ ຂຶ້ນກ່ຽວກັບຮູບການ, ເນື້ອໃນ ແລະ ການແບ່ງໜ້າທີ່ຄວາມຮັບຜິດຊອບຂອງພະແນກຍຸຕິທຳແຂວງ, ນະຄອນຫຼວງ ແລະ ຫ້ອງການຍຸຕິທຳເມືອງ, ນະຄອນ ແລະ ເທດສະບານ ໃນວຽກງານດັ່ງກ່າວ ໃນນີ້ໄດ້ມີກຳນົດຫຼັກການໃໝ່ ກ່ຽວກັບ ຜົນຂອງການຕິດຕາມ ແລະ ກວດກາ ຊຶ່ງວິສາຫະກິດ ທີ່ຖືກຕິດຕາມ ແລະ ກວດກາຫາກບໍ່ແກ້ໄຂຜົນຂອງການຕິດຕາມ ແລະ ກວດກາ ທີ່ກ່ຽວຂ້ອງກັບຕົນແລ້ວ ຈະເປັນເງື່ອນໄຂພາໃຫ້ມີການໂຈະ ແລະ ຖອນການອະນຸຍາດ.

**ໝວດທີ 7 ການໂຈະ ແລະ ການຖອນການອະນຸຍາດດຳເນີນທຸລະກິດກົດໝາຍ** ປະກອບດ້ວຍ 2 ມາດຕາ (ແຕ່ມາດຕາ 30 ແລະ ມາດຕາ 31) ເວົ້າເຖິງ ຂັ້ນຕອນໃນການໂຈະການດຳເນີນທຸລະກິດກົດໝາຍ ແລະ ການຖອນໃບອະນຸຍາດ ແລະ ລຶບຊື່ວິສາຫະກິດອອກຈາກຖານຂໍ້ມູນວິສາຫະກິດກົດໝາຍ ຊຶ່ງເປັນການຜັນຂະຫຍາຍມາຈາກມາດຕາ 61 ຂອງກົດໝາຍວ່າດ້ວຍທະນາຍຄວາມ ໃຫ້ມີຄວາມຊັດເຈນ ແລະ ຮັດກຸມຂຶ້ນຕື່ມອີກ.

**ໝວດທີ 8 ບົດບັນຍັດສຸດທ້າຍ** ປະກອບດ້ວຍ 2 ມາດຕາ (ມາດຕາ 32 ແລະ ມາດຕາ 33) ເວົ້າເຖິງການຈັດຕັ້ງປະຕິບັດ ໂດຍເນັ້ນໃສ່ການໂຄສະນາເຜີຍແຜ່ເພື່ອສ້າງສະຕິເຄົາລົບກົດໝາຍໄລຍະໜຶ່ງກ່ອນຂໍ້ຕົກລົງມີຜົນສັກສິດ ແລະ ຜົນສັກສິດຂອງຂໍ້ຕົກລົງ ຊຶ່ງໃນນີ້ ໄດ້ກຳນົດກ່ຽວກັບ ການປັບປຸງໃບອະນຸຍາດດຳເນີນທຸລະກິດກົດໝາຍ ຂອງວິສາຫະກິດກົດໝາຍດ້ວຍຄວາມສະໝັກໃຈ ແລະ ກຳນົດໃຫ້ຂໍ້ຕົກລົງມີຜົນສັກສິດໃນວັນທີ 1 ເດືອນກຸມພາ ປີ 2026 ເພື່ອໃຫ້ມີເວລາໂຄສະນາເຜີຍແຜ່ຢ່າງກວ້າງຂວາງໃຫ້ສັງຄົມຮັບຮູ້ ແລະ ປັບປຸງພາຍໃນເພື່ອການຈັດຕັ້ງປະຕິບັດທີ່ມີປະສິດທິພາບ ແລະ ປະສິດທິຜົນ.

ຮ່າງຂໍ້ຕົກລົງວ່າດ້ວຍການອະນຸຍາດດຳເນີນທຸລະກິດ ແລະ ການຄຸ້ມຄອງວິສາຫະກິດກົດໝາຍສະບັບນີ້ ໄດ້ຜ່ານການປຶກສາຫາລື ແລະ ປະກອບຄຳເຫັນ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ໂດຍມີພາກລັດ ແລະ ເອກະຊົນ ເຂົ້າຮ່ວມ ແລະ ປະກອບສ່ວນເຂົ້າໃນການປັບປຸງເນື້ອໃນຂອງຮ່າງຂໍ້ຕົກລົງ ໃຫ້ມີຄວາມອຸດົມສົມບູນ ແລະ ສາມາດຈັດຕັ້ງປະຕິບັດໄດ້ ເມື່ອມີການຕົກລົງຮັບຮອງ. ໃນນີ້ ອັນພົ້ນເດັ່ນແມ່ນ:

- ໄດ້ປຶກສາຫາລື ແລະ ທາບທາມພາຍໃນກົມ ແລະ ຄະນະກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທຳ 3 ຄັ້ງ;

- ໄດ້ຮັບການປະກອບຄຳເຫັນເປັນລາຍລັກອັກສອນ ຈາກ ຫ້ອງການກະຊວງ, ບັນດາກົມ ໂດຍສະເພາະ ກົມກົດໝາຍ, ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ສະຖາບັນຍຸຕິທຳແຫ່ງຊາດ ແລະ ບັນດາພະແນກ ຍຸຕິທຳແຂວງ, ນະຄອນຫຼວງ;

- ໄດ້ປຶກສາຫາລື ແລະ ທາບທາມ ຮ່າງຂໍ້ຕົກລົງ ກັບສະພາທະນາຍຄວາມ ໃນຄັ້ງວັນທີ ..........ຕຸລາ 2025;

- ໄດ້ປຶກສາຫາລື ແລະ ທາບທາມ ຮ່າງຂໍ້ຕົກລົງກັບບັນດາວິສະຫະກິດກົດໝາຍ ຢ່າງເປີດກວ້າງ ໃນວັນທີ ..........ພະຈິກ 2025 ຊຶ່ງມີ ..........ວິສາຫະກິດກົດໝາຍເຂົ້າຮ່ວມ ແລະ ປະກອບສ່ວນປັບປຸງຮ່າງຂໍ້ຕົກລົງ.

ຜ່ານການທາບທາມ ແລະ ປະກອບຄຳຄິດຄຳເຫັນຈາກພັກລັດ ແລະ ເອກະຊົນ ຢ່າງເລິກເຊິ່ງ ແລະ ກວ້າງຂວາງ ເຫັນວ່າ ຮ່າງຂໍ້ຕົກລົງທີ່ສະເໜີມານີ້ ຖືກຕ້ອງ ສອດຄ່ອງກັບແນວທາງນະໂຍບາຍຂອງພັກ ໂດຍສະເພາະ ມະຕິຂອງກົມການເມືອງສູນກາງພັກ, ເລກທີ 112/ກມສພ ແລະ ສອດຄ່ອງກັບກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ທີ່ກ່ຽວຂ້ອງ ສາມາດຮັບຮອງ ແລະ ປະກາດໃຊ້ໄດ້.

## III. ຄາດຄະເນ ຜົນປະໂຫຍດ ທີ່ຈະໄດ້ຈາກການສ້າງຂໍ້ຕົກລົງວ່າດ້ວຍການອະນຸຍາດ ດຳເນີນທຸລະກິດ ແລະ ການຄຸ້ມຄອງວິສາຫະກິດກົດໝາຍ.

ພາຍຫຼັງທີ່ຮ່າງຂໍ້ຕົກລົງສະບັບນີ້ ໄດ້ຮັບການຮັບຮອງ ແລະ ປະກາດໃຊ້ ຢ່າງເປັນທາງການ, ຄາດຄະເນວ່າ ຈະມີຜົນປະໂຫຍດດັ່ງລຸ່ມນີ້:

1. ການອະນຸຍາດໃຫ້ວິສາຫະກິດກົດໝາຍ ແລະ ການຄຸ້ມຄອງວິສາຫະກິດກົດໝາຍ ມີຖືກຈັດຕັ້ງປະຕິບັດ ຢ່າງລວມສູນ, ເອກະພາບ ແລະ ໂປ່ງໃສ ທັງຮັບປະກັນຄຸນນະພາບຂອງວຽກງານສູງຂຶ້ນກວ່າເກົ່າ ປະກອບ ສ່ວນເຂົ້າໃນການຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍ, ມະຕິ, ຄຳສັ່ງ ຂອງພັກ ແລະ ກົດໝາຍຂອງລັດ ໄດ້ມີປະສິດທິຜົນ ທັງເປັນບ່ອນອີງໃຫ້ແກ່ການຈັດຕັ້ງປະຕິບັດໜ້າທີ່ ແລະ ຄວາມຮັບຜິດຊອບຂອງແຕ່ລະ ພາກສ່ວນ ໜັກແໜ້ນ ເຂັ້ມແຂງ ຂຶ້ນກວ່າເກົ່າ;
2. ຫຼັກການ, ຂັ້ນຕອນ, ວິທີການ ແລະ ກົນໄກໃນການພິຈາລະນາການໃຫ້ອະນຍຸາດ ແລະ ການຄຸ້ມຄອງ ແລະ ກວດກາ ການຈັດຕັ້ງ ແລະ ການເຄື່ອນໄຫວ ວິສາຫະກິດກົດໝາຍ ມີຄວາມຊັດເຈນ, ຈະແຈ້ງ, ຮັດກຸມ ແລະ ໂປ່ງໃສຂຶ້ນກວ່າເກົ່າ ເປັນທ່າແຮງໜຶ່ງ ໃນການສ້າງລັດທີ່ປົກຄອງດ້ວຍກົດໝາຍ ຢ່າງໜັກແໜ້ນເທື່ອ ລະກ້າວ ເຮັດໃຫ້ການຄຸ້ມຄອງວຽກງານທະ ນາຍຄວາມເວົ້າລວມ ເວົ້າສະເພາະວິສາຫະກິດກົດໝາຍ ນັບມື້ ນັບປອດໃສ ເຂັ້ມແຂງ ໜັກແໜ້ນ ເຄື່ອນໄຫວ ຖືກຕ້ອງຕາມກົດໝາຍ ແລະ ປະຕິບັດໜ້າທີ່ ຊ່ວຍເຫຼືອ ປະຊາຊົນ ດ້ວຍຄວາມບໍລິສຸດສັດຊື່.
3. ຕອບສະໜອງການສ້າງຄວາມໄວ້ເນື້ອເຊື່ອໃຈ ແລະ ຍົກສູງກຽດສັກສີຂອງທະນາຍຄວາມ ແລະ ວິສາຫະ ກິດກົດໝາຍ ໃນສັງຄົມ ກໍຄືປະຊາຊົນ ສູງຂຶ້ນກວ່າເກົ່າ, ຜູ້ໃຊ້ບໍລິການ ກໍມີຄວາມໝັ້ນໃຈຂຶ້ນກວ່າເກົ່າວ່າ ໄດ້ຮັບການປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງຕົນຕາມກົດໝາຍ ຈາກການບໍລິການທາງດ້ານກົດ ໝາຍຂອງວິສາຫະກິດກົດໝາຍ.

**ຫົວໜ້າກົມ**